

# ຂະແໜງກາເຟໃນ ສປປ ລາວ - ບົດແນະນຳສັ້ນ


ຮິບໂຮມໂດຍ

ມະລິພອນ ດວງພະຈັນ, ອາລິນາ ເຟີຣາຣາ, ເຈດຊີ ຣານິກ

ອີວາ ມິງ, ມະນີວັນ ແສງພະຈັນ, ຢາຣິນ ສະເມີລິງ



ເມສາ 2022

# ສາລະບານ


ຄຳສັບຫຍໍ້ 3

ກາເຟໃນ ສປປ ລາວ - ພາບລວມ 4

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ 4

ການພັດທະນາຂະແໜງກາເຟລາວ 6

ການສ້າງລາຍຮັບຈາກກາເຟ - ພາກສ່ວນທີ່ກ່ຽວຂ້ອງ 6

ກິດຈະກຳຕົ້ນຕໍໃນການຜະລິດກາເຟ 8

ການປຸງແຕ່ງກາເຟ 9

ການພັດທະນາແບບຍືນຍົງ 11

ຂົງເຂດທີ່ກະທົບ 12

ເສດຖະກິດຂອງຂະແໜງກາເຟລາວ 12

ສະພາບແວດລ້ອມ - ການພົວພັນກັນທາງດ້ານສັງຄົມ-ນິເວດວິທະຍາ 14

ສະພາບຊີວິດການເປັນຢູ່ຂອງຜູ້ຜະລິດກາເຟໃນທ້ອງຖິ່ນ 17

ການບໍລິຫານຄຸ້ມຄອງ 20

ການເຊື່ອມໂຍງເຂົ້າກັບປະຊາຄົມໂລກ 23

ບົດສົ່ງທ້າຍ 24

ສາລະບານຮູບພາບ 26

ບັນນານຸກົມ 27

# ຄຳສັບຫຍໍ້

| | |
|---|---|
| ADB | ທະນາຄານພັດທະນາອາຊີ |
| ASEAN | ສະມາຄົມປະຊາຊາດອາຊີຕາເວັນອອກສຽງໃຕ້ |
| BRI | ແຜນງານລິເລີ່ມ Belt-and-Road |
| CHF | ສະກຸນເງິນຂອງປະເທດສະວິດ |
| FDFA | ກະຊວງການຕ່າງປະເທດຂອງລັດຖະບານກາງ |
| GDP | ຍອດລວມຜະລິດຕະພັນພາຍໃນ |
| GNI | ລາຍຮັບລວມແຫ່ງຊາດ |
| ICO | ອົງການກາເຟສາກົນ |
| INGO | ອົງການສາກົນທີ່ບໍ່ສັງກັດລັດຖະບານ |
| LAK | ສະກຸນເງິນຂອງປະເທດລາວ |
| Lao PDR | ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ |
| LDC | ປະເທດດ້ອຍພັດທະນາ |
| LPRP | ພັກປະຊາຊົນປະຕິວັດລາວ |
| NEM | ກົນໄກເສດຖະກິດແບບໃໝ່ |
| NGO | ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ |
| PRC | ສາທາລະນະລັດປະຊາຊົນຈີນ |
| SD | ການພັດທະນາແບບຍືນຍົງ |
| SDC | ອົງການພັດທະນາ ແລະ ການຮ່ວມມືຂອງສະວິສເຊີແລນ |
| SDG | ເປົ້າໝາຍການພັດທະນາແບບຍືນຍົງ |
| UN | ອົງການສະຫະປະຊາຊາດ |
| UNCTAD | ກອງປະຊຸມຂອງອົງການສະຫະປະຊາຊາດກ່ຽວກັບການຄ້າ ແລະ ການພັດທະນາ |
| UNESCO | ອົງການການສຶກສາ, ວິທະຍາສາດ ແລະ ວັດທະນະທຳ ແຫ່ງສະຫະປະຊາຊາດ |
| USD | ໂດລາສະຫະລັດ |
| WTO | ອົງການການຄ້າໂລກ |

*ອັດຕາແລກປ່ຽນລະຫວ່າງເງິນກີບ ແລະ ຟຣັງສະວິດ ແມ່ນອີງໃສ່ອັດຕາແລກປ່ຽນຂອງວັນທີ 16.03.22 ຄື 1 CHF = 12,152.6 LAK (cf https://www.xe.com/currencycharts/?from=CHF&to=LAK)*

# ກາເຟໃນ ສປປ ລາວ - ພາບລວມ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ




*ຮູບທີ 1: ແຜນທີ່ ສປປ ລາວ , ທີ່ມາ: Google Maps.*

ໃນເດືອນພຶດສະພາ ປີ 1954, ຜູ້ຕາງໜ້າຂອງປະເທດກຳປູເຈຍ, ສາທາລະນະລັດປະຊາທິປະໄຕຫວຽດນາມ, ຝຣັ່ງ, ລາວ, ສາທາລະນະລັດປະຊາຊົນຈີນ (ສປ ຈີນ), ລັດຫວຽດນາມ, ສະຫະພາບສັງຄົມນິຍົມໂຊວຽດ (USSR), ສະຫະຣາຊະອານາຈັກ (UK) ແລະ ສະຫະລັດອາເມລິກາ (USA) ໄດ້ຈັດກອງປະຊຸມຂຶ້ນຢູ່ທີ່ນະຄອນເຈນີວາ ໂດຍມີຊື່ວ່າ " ກອງປະຊຸມກ່ຽວກັບບັນຫາການຟື້ນຟູສັນຕິພາບຢູ່ອິນໂດຈີນ". ໜຶ່ງໃນສິ່ງທີ່ປຶກສາຫາລືກັນແມ່ນການມີຄູ່ມືແນະນຳກ່ຽວກັບການຫຍຸດຍິງຢູ່ໃນພາກພື້ນ ແລະ ການຖອນກຳລັງທະຫານຕ່າງປະເທດອອກຈາກທີ່ນັ້ນ, ໄດ້ຍຸດຕິການຕົກເປັນປະເທດອານານິຄົມຂອງຝຣັ່ງ 60 ປີທີ່ປົກຄອງກຳປູເຈຍ, ຫວຽດນາມ ແລະ ລາວ. ເຖິງແມ່ນວ່າຈະມີເຈດຕະນາທີ່ດີ, ແຕ່ໃນ ຫຼາຍທົດສະວັດຕໍ່ມາ ແມ່ນເຕັມໄປດ້ວຍການສໍ້ລາດບັງຫຼວງ, ຄວາມຮຸນແຮງ, ແລະ ການແຊກ ແຊງຂອ ຕ່າງປະເທດ, ແລະ ໃນທີ່ສຸດກໍເກີດສົງ ຄາມກາງເມືອງ, ຍ້ອນວ່າອີງຕາມພູມີສາດການເມືອງແລ້ວ ປະເທດລາວຖືກແຍກອອກຈາກກະແສຂອງຂອງສົງຄາມເຢັນ. ພາຍຫຼັງທີ່ປິດບັງປະ ຊາຊົນມາເປັນເວລາຫຼາຍປີ, ເອກະສານເພັນຕາກອນ (Pentagon) ເຊິ່ງເປັນຮອບຮວມຂໍ້ມູນລັບຂອງໜ່ວຍງານ CIA ທີ່ຖືກຮົ່ວໄຫລໃນປີ 1971, ໄດ້ເປີດເຜີຍຂໍ້ມູນກ່ຽວກັບຂອບເຂດຂອງການແຊກແຊງຂອງສະຫະລັດໃນລາວ. ເປັນເວລາຫນຶ່ງທົດສະວັດແລ້ວທີ່ກອງທັບອາກາດຂອງອາເມລິກາໄດ້ວາງລະເບີດຢ່າງເປັນລະບົບໃນຫຼາຍໆຈຸດຂອງຝ່າຍກອມມູນິດປະເທດປະເທດລາວ, ພ້ອມທັງບັນດາເສັ້ນທາງເຊື່ອມຫາຫວຽດ ນາມໃຕ້ ທີ່ຮູ້ຈັກກັນໃນຊື່ເສັ້ນທາງໂຮຈິມິນ (ເບິ່ງ Haney 1972) . ການຖິ້ມລະເບີດເຫຼົ່ານີ້

ໄດ້ສົ່ງຜົນກະທົບຢ່າງຮ້າຍແຮງຕໍ່ປະຊາກອນ, ເຮັດໃຫ້ 350,000 ຄົນເສຍຊີວິດ ເຊິ່ງຫຼາຍກວ່າຫນຶ່ງສ່ວນສິບຂອງຈຳນວນປະຊາກອນ (Saxon 1975) . ໃນປີ 1975 ຄວາມຂັດແຍ້ງ ໄດ້ສິ້ນສຸດ ລົງດ້ວຍໄຊຊະນະຂອງຝ່າຍປະເທດລາວ ເຊິ່ງໄດ້ສືບທອດໃນການປົກຄອງປະເທດທີ່ຖືກທຳລາຍຈາກສົງຄາມ ແລະ ປະກາດເປັນປະເທດສາ ທາລະນະລັດປະຊາທິປະໄຕປະຊາຊົນລາວ (ສປປ ລາວ) ແຕ່ຄວາມທຸກໂສກຂອງປະຊາຊົນລາວແມ່ນຍັງມີຢູ່ຢ່າງຫຼວງຫຼາຍ. ຄວາມຈິງແລ້ວ, ມີການຄາດຄະເນວ່າປະມານ 30% ຂອງພື້ນທີ່ຂອງປະເທດທີ່ຍັງຄົງມີລະເບີດທີ່ບໍ່ທັນແຕກປົກຄຸມຢູ່ ສົ່ງຜົນໃຫ້ 30% ຂອງເນື້ອທີ່ດິນຂອງ ປະເທດຖືກປົນເປື້ອນດ້ວຍລະເບີດທີ່ບໍ່ທັນແຕກ (UXO), ອີງຕາມອົງການ NGO ຂອງອາເມລິກາທີ່ເວົ້າງເລື່ອງຜົນຂອງສົງຄາມ (Legacies of War)[1]. ນັບຕັ້ງແຕ່ການຄວາມຂັດແຍ້ງໄດ້ສິ້ນສຸດລົງ, ສິ່ງເຫຼົ່ານີ້ໄດ້ສົ່ງຜົນໃຫ້ມີການເສຍຊີວິດຂອງພົນລະເຮືອນຫຼາຍກວ່າ 25,000 ຄົນ ແລະ ໄດ້ໃຊ້ເວລາຫຼາຍທົດສະວັດຂອງເຈົ້າຫນ້າທີ່ສະຫະລັດໃນການຮັບຮູ້ການກະທຳຂອງພວກເຂົາ, ອີງຕາມກົດຫມາຍວ່າດ້ວຍການກວາດລ້າງລະເບີດທີ່ຍັງບໍ່ທັນແຕກສະບັບປີ 2019, ເຊິ່ງລະບຸວ່າ " ແຕ່ປີ 1964-1973 ສະຫະລັດອາເມລິກາໄດ້ຖິ້ມລະ ເບີດຫຼາຍກວ່າ 2,000,000 ໂຕນໃສ່ປະເທດລາວ" ເຊິ່ງເຮັດໃຫ້ປະເທດລາວເປັນ "ປະເທດທີ່ຖືກຖິ້ມລະເບີດຢ່າງໜັກໜ່ວງທີ່ສຸດໃນປະຫວັດສາດໂດຍສະເລ່ຍຕໍ່ຫົວຄົນ", ເຊິ່ງອີງຕາມການກ່າວຂອງປະທານາທິບໍດີສະຫະລັດ ທ່ານ ບາຣັກ ໂອບາມາ ໃນການມາຢ້ຽມຢາມ ນະຄອນຫຼວງວຽງຈັນຢ່າງເປັນທາງການໃນປີ 2016.

ໃນກາງຊຸມປີ 1980, ສປປ ລາວ ໄດ້ເປີດຕົວຂອບນະໂຍບາຍໃໝ່, ນັ້ນກໍຄືກົນໄກເສດຖະກິດໃໝ່ (NEM), ເຊິ່ງມີລັກສະນະເສລີທາງດ້ານ ການຄ້າ ແລະ ການຕະຫຼາດ. ສຳລັບການປະຕິຮູບນີ້ລວມມີການຮ່ວມມືດ້ານເສດຖະກິດທີ່ກວ້າງຂວາງກັບຕ່າງປະເທດ ແລະ ບັນດາສະຖາບັນລະດັບໂລກເຊັ່ນ ອົງການການຄ້າໂລກ (WTO). ມາຮອດປະຈຸບັນ, ສປປ ລາວ ມີລະບອບພັກດຽວຄືພັກປະຊາຊົນ ປະຕິວັດລາວ (LPRP) ທີ່ຂັບເຄື່ອນປະເທດໄປສູ່ສິ່ງທີ່ເອີ້ນວ່າ ການປະນີປະນອມລະຫວ່າງທຶນນິຍົມ ແລະ ສັງຄົມນິຍົມ.

ອີງຕາມ ເງື່ອນໄຂສາມຢ່າງ (1) ຊັບພະຍາກອນມະນຸດ (2) ຄວາມບອບບາງທາງດ້ານເສດຖະກິດ ແລະ (3) ລາຍຮັບແຫ່ງຊາດລວມຕໍ່ຫົວຄົນ, ສປປ ລາວ ຖືກຈັດໃຫ້ເປັນປະເທດດ້ອຍພັດທະນາ (LDC) ໂດຍອົງການສະຫະປະຊາຊາດ. ຢ່າງໃດກໍຕາມ, ໃນປີ 2018, ປະເທດໄດ້ບັນລຸ *ເງື່ອນໄຂການອອກຈາກການເປັນປະເທດດ້ອຍພັດທະນາ* ເປັນຄັ້ງທຳອິດ, ເຊິ່ງນຳໄປສູ່ກອງປະຊຸມສະຫະປະຊາຊາດກ່ຽວກັບການຄ້າ ແລະ ການພັດທະນາ (UNCTAD) ທີ່ໃຫ້ຄຳແນະນຳການບັນລຸໄປສູ່ລະດັບທີ່ສູງກວ່າ LDC. ເນື່ອງຈາກການລະບາດຂອງພະຍາດໂຄວິດ-19, ໄລຍະການຂ້າມຜ່ານໄດ້ຖືກຂະຫຍາຍເວລາອອກໄປ. ແລະ ເມື່ອຈັດປະເພດຄືນໃຫມ່, ການບັນລຸອອກຈາກປະເທດດ້ອຍພັດທະນາອາດຈະມີຜົນກະທົບອັນໃຫຍ່ຫຼວງ ຕໍ່ການສົ່ງອອກຂອງປະເທດຈາກການຜະລິດທີ່ນຳໃຊ້ແຮງງານ, ນັບຕັ້ງແຕ່ການອອກຈາກສະຖານະພາບຂອງ LDC ມັນຈະຫມາຍຄວາມວ່າປະເທດຈະບໍ່ໄດ້ຮັບຜົນປະໂຫຍດແບບພິເສດໃນຖານະຂອງ LDC ອີກຕໍ່ໄປ ເຊັ່ນ: ສິດທິພິເສດໃນການເຂົ້າເຖິງ ຕະຫຼາດ. (UN DESA 2018; Tavares 2021) .

[1] http://legaciesofwar.org/about-laos/leftover-unexploded-ordnances-uxo/ ເຂົ້າເຖິງວັນທີ 12.01.22

ກາເຟທີ່ມີຫຼາກຫຼາຍຊະນິດ (ເຊັ່ນ: ກາເຟນ້ອຍ ຫຼື Arabica, ກາເຟກາງ ຫຼື Robusta ແລະ ກາເຟມິກ ຫຼື Excelsa) ໄດ້ຖືກນຳເຂົ້າມາສູ່ປະເທດລາວຄັ້ງທຳອິດໂດຍນັກອານານິຄົມຊາວຝຣັ່ງເກືອບໜຶ່ງສັດຕະວັດກ່ອນ (1920). ການນຳໃຊ້ກົນໄກເສດຖະກິດໃໝ່ (NEM) ໃນປີ 1986 ໄດ້ຊຸກຍູ້ການເຕີບໂຕຂອງການຜະລິດ ແລະ ການສົ່ງອອກກາເຟ ແລະ ໄດ້ຊຸກຍູ້ການຫັນປ່ຽນຂອງຂະແໜງກະສິກຳຢູ່ພາກໃຕ້ຂອງລາວ. ໃນໄລຍະການຫັນປ່ຽນດັ່ງກ່າວ, ກາເຟໄດ້ກາຍເປັນໜຶ່ງໃນສິນຄ້າສົ່ງອອກດ້ານການກະສິກຳທີ່ສຳຄັນຂອງລາວ ແລະ ໄດ້ປະກອບສ່ວນສຳ ຄັນເຂົ້າໃນການສ້າງມູນຄ່າເພີ່ມຂອງຂະແໜງກະສິກຳໂດຍລວມ (Rigg 2005; MPI 2016). ການຂະຫຍາຍຕົວດ້ານການສົ່ງອອກກາເຟ ໄດ້ປ່ຽນແປງຊີວິດການເປັນຢູ່ແລະແຫຼ່ງລາຍຮັບຂອງຊາວກະສິກອນໃນທ້ອງຖິ່ນ. ໃນນີ້ຄາດວ່າຂະແໜງກາເຟຈະປະກອບສ່ວນພັດທະນາພາກພື້ນໂດຍຜ່ານສອງກົນໄກ. ອັນທຳອິດແມ່ນດ້ວຍການສ້າງລາຍຮັບແລະວຽກເຮັດງານທຳ, ກາເຟສາມາດເປັນຕົວກະຕຸ້ນໃຫ້ແກ່ການພັດທະນາເສດຖະກິດ. ສ່ວນອັນທີສອງຄືການສົ່ງອອກກາເຟທີ່ຊ່ວຍເພີ່ມລາຍຮັບດ້ານພາສີອາກອນ, ເຊິ່ງຊ່ວຍກະຕຸ້ນການລົງທຶນຂອງພາກລັດ ແລະ ສະໜອງວນການໃຊ້ເງິນຕາຕ່າງປະເທດ, ເຊິ່ງມີຄວາມສຳຄັນຕໍ່ສະຖຽນລະພາບທາງດ້ານການເງິນແລະການຄຸ້ມຄອງອັດຕາແລກປ່ຽນ ( Phommavong 2015) .

## ການສ້າງລາຍຮັບຈາກກາເຟ - ພາກສ່ວນທີ່ກ່ຽວຂ້ອງ

ຜູ້ດຳເນີນການທີ່ແຕກຕ່າງກັນແມ່ນສ່ວນຫນຶ່ງຂອງລະບົບຕ່ອງໂສ້ມູນຄ່າກາເຟລາວໃນທົ່ວໂລກ:




*ຮູບທີ 2: ຕ່ອງໂສ້ມູນຄ່າກາເຟ ແລະ ພາກສ່ວນກ່ຽວຂ້ອງ. ແຫຼ່ງຂໍ້ມູນ: Galindo ແລະSallée 2008*

ການຕິດຕາມຢ່າງໃກ້ຊິດໃນລະດັບການຜະລິດສະແດງໃຫ້ເຫັນວ່າຜູ້ຜະລິດກາເຟສາມາດແຍກອອກເປັນກຸ່ມຕ່າງໆໄດ້ຄື:

1. **ຊາວສວນສ່ວນບຸກຄົນ** ແມ່ນຜູ້ຜະລິດກາເຟຕົ້ນຕໍ. ເຖິງຢ່າງໃດກໍຕາມ, ເຂົາເຈົ້າໄດ້ອີງໃສ່ບັນດາພໍ່ຄ້າຊາວຂາຍ ເຊິ່ງໄດ້ແກ່ຄືຜູ້ເລາະຊື້ພາຍໃນບ້ານ, ຜູ້ຄ້າສົ່ງຂອງເມືອງ ແລະ ບັນດາບໍລິສັດເພື່ອເຂົ້າສູ່ຕະຫຼາດໂລກ.
2. **(ແຮງງານເຄື່ອນຍ້າຍ) ແຮງງານຮັບຈ້າງ** ເຮັດວຽກໃຫ້ຊາວສວນອື່ນ ຫຼື ໃນສວນກາເຟທີ່ໃຫຍ່ກວ່າ. ໃນລະດູການເກັບກ່ຽວ, ຄວາມຕ້ອງການແຮງງານມີສູງ, ນອກຈາກຊາວບ້ານໃນທ້ອງຖິ່ນແລ້ວ ແຮງງານເຄື່ອນຍ້າຍກໍມີບົດບາດສຳຄັນ. ສ່ວນໃຫຍ່ມາຈາກແຂວງ ໃກ້ຄຽງໄປຫາພູພຽງບໍລະເວນເພື່ອໄປເຮັດວຽກໃນຂະແໜງກາເຟ.
3. **ກຸ່ມຊາວສວນ (ຫຼືເອີ້ນວ່າ ສະຫະກອນ)** ສະໜອງກາເຟໃຫ້ແກ່ຕະຫຼາດພາຍໃນ ແລະ ສົ່ງອອກກາເຟໂດຍກົງໄປຍັງຕະຫຼາດສະເພາະ ຫຼື ການຄ້າເປັນທຳ. ພວກເຂົາຈະຖືກນຳສະເຫນີລາຍລະອຽດເພີ່ມເຕີມຂ້າງລຸ່ມນີ້.
4. **ນັກລົງທຶນເອກະຊົນ** ຜະລິດກາເຟໃນສວນຂະຫນາດໃຫຍ່. ພວກເຂົາສ່ວນຫຼາຍແມ່ນບໍລິສັດຕ່າງປະເທດ ແລະ ມີພຽງບໍລິສັດເອ ກະຊົນຂອງທ້ອງຖິ່ນບໍລິສັດດຽວ.

ຜູ້ຜະລິດກາເຟທ້ອງຖິ່ນຫຼາຍຄົນປະສົມປະສານຍຸດທະສາດການດຳລົງຊີວິດທີ່ມີຄວາມຫຼາກຫຼາຍ. ຕົວຢ່າງ: ພວກເຂົາຜະລິດກາເຟບາງສ່ວນໃນ ພື້ນທີ່ນ້ອຍໆຂອງພວກເຂົາ ແລະ ເຮັດວຽກໃນຊ່ວງເວລາເກັບກ່ຽວຂອງຊາວກະສິກອນ ຫຼື ບໍລິສັດໃຫຍ່ກວ່າ, ໃນຂະນະທີ່ຍັງເກັບຮັກສາສັດລ້ຽງ ແລະ ພືດຜັກຈຳນວນໜຶ່ງໄວ້ເພື່ອລ້ຽງຊີບ. ໂດຍອີງຕາມວິທີທີ່ຜູ້ຜະລິດກາເຟເຫຼົ່ານີ້ມີສ່ວນຮ່ວມໃນການຜະລິດກາເຟ, ພວກເຂົາໄດ້ຜະເຊີນ ກັບຂໍ້ໄດ້ປຽບແລະຄວາມທ້າທາຍ ຫຼາຍຢ່າງທີ່ແຕກຕ່າງກັນ.

ນອກເໜືອໄປຈາກຜູ້ດຳເນີນການທີ່ກ່ຽວຂ້ອງໂດຍກົງ, ຍັງມີຜູ້ທີ່ສະໜັບສະໜູນ ແລະ/ຫຼື ຄຸ້ມຄອງຂະແໜງການເຊັ່ນ: **ອຳນາດການປົກຄອງ** ຂັ້ນ ຕ່າງໆ ແລະ **ອົງການພັດທະນາສາກົນ** ແລະ ອົງການ NGO.

## ກິດຈະກຳຕົ້ນຕໍໃນການຜະລິດກາເຟ



*ຮູບທີ 3: ການປູກກາເຟໃນລາວ, ຮູບພາບໂດຍ Stephanie Jaquet.*

ການປູກກາເຟແມ່ນອີງປະກອບຫຼັກຂອງຂະແໜງການທັງຫມົດແລະພາກສ່ວນທີ່ກ່ຽວຂ້ອງແລະໃຊ້ຄວາມພະຍາຍາມຫຼາຍໃນການເບິ່ງແຍງ. ເພື່ອໃຫ້ໄດ້ຜະລິດຕະພັນທີ່ມີຄຸນນະພາບແລະປະລິມານສູງ, ປັດໄຈທີ່ແຕກຕ່າງກັນໃນທຸກຂັ້ນຕອນຕ້ອງໄດ້ຕະໜັກໄວ້. ຂັ້ນຕອນການຜະລິດ ກາເຟທີ່ສຳຄັນທີ່ສຸດປະກອບມີຄື:

1. **ການປູກ** : ກຽມດິນ ແລະ ກ້າເບ້ຍ
2. **ການເບິ່ງແຍງ**:ເສຍຫຍ້າ ແລະ ໃສ່ຝຸ່ນຕົ້ນກາເຟນ້ອຍ ແລະ ຕັດກິ່ງກ້ານທີ່ຕິບໜາພາຍຫຼັງທີ່ເປັນເບ້ຍນ້ອຍ.
3. **ການເກັບໝາກກາເຟ**
4. **ການປຸງແຕ່ງ** ກາເຟຫຼັງຈາກການເກັບກ່ຽວ (ສ່ວນຫຼາຍແມ່ນປອກເປືອກແລະລ້າງ). ມີວິທີການທີ່ແຕກຕ່າງກັນສໍາລັບຂະບວນການ ເຫຼົ່ານີ້.
5. **ຂົ້ວກາເຟ**ໝາກຂາວ (ໝາກທີ່ລ້າງແລ້ວ)

## ການປຸງແຕ່ງກາເຟ

ໃນປະເທດລາວ, ປູກກາເຟ 2 ຊະນິດຫຼັກຄື: *ກາເຟກາງ* ແລະ *ກາເຟນ້ອຍ*. ໂດຍຂຶ້ນຢູ່ກັບແນວພັນ, ວັດສະດຸປ້ອນທີ່ຈຳເປັນສຳລັບແຮງງານ, ຝຸ່ນແລະຢາປາບສັດຕູພືດ, ເວລາໃນການເກັບກ່ຽວ, ວິທີການປຸງແຕ່ງ, ແລະ ຄຸນນະພາບ (ເຊິ່ງສິ່ງຜົນຕໍ່ກັບລາຄາ) ທີ່ແຕກຕ່າງກັນ. ສຳລັບແນວພັນ *ກາເຟນ້ອຍ* ແມ່ນມີຄຸນນະ ພາບສູງກວ່າ ແລະ ຍັງໄດ້ຮັບລາຄາທີ່ສູງກວ່າແນວພັນ *ກາເຟກາງ*. ຢ່າງໃດກໍ່ຕາມ, ການຜະລິດ ແລະ ການປຸງແຕ່ງກາເຟແມ່ນຍັງມີຄວາມສະຫຼັບຊັບຊ້ອນຫຼາຍ ແລະ ຕ້ອງການວັດສະດຸທີ່ຈະປ້ອນແຮງງານ ແລະ ຝຸ່ນເພີ່ມເຕີມອີກ. ໃນຂະບວນຕ່ອງໂສ້ມູນຄ່າຂອງຜະລິດຕະພັນ ຍັງຈຳເປັນຕ້ອງການໂຮງອື້ວ, ເຄື່ອງສີ, ແລະ ເຄື່ອງຂົ້ວ. ສຳລັບກາເຟກາງແມ່ນຖືກປຸງແຕ່ງດ້ວຍ*ວິທີການແຫ້ງ,*
ເຊິ່ງບໍ່ແມ່ນຂັ້ນຕອນທີ່ສະຫຼັບຊັບຊ້ອນຫຼາຍ.




*ຮູບທີ 4: ຂັ້ນຕອນທີ່ແຕກຕ່າງກັນຂອງແຕ່ລະວິທີການປຸງແຕ່ງ. ແຫຼ່ງຂໍ້ມູນ: Galindo ແລະ Sallée 2008.*

ແນວພັນກາເຟແມ່ນຕ້ອງການພຽງແຕ່ເຄື່ອງສີກາເຟແບບງ່າຍດາຍເພື່ອປຸງແຕ່ງໝາກຂຽວ ເຊັ່ນດຽວ ກັນກັບເຄື່ອງຂົ້ວກາເຟເພື່ອປັບປຸງໃຫ້ເປັນຜະລິດຕະພັນສຸດທ້າຍ.

ໃນທາງກົງກັນຂ້າມ,ກາເຟນ້ອຍ *ໄດ້ຖືກປຸງແຕ່ງດ້ວຍວິທີການແບບປຽກ,* ເຊິ່ງ ປະກອບດ້ວຍຂັ້ນຕອນທີ່ຫຼາຍກ່ວາກາເຟກາງ. ສຳລັບການປຸງແຕ່ງແບບປຽກໂດຍສະເພາະແມ່ນຈຳເປັນຕ້ອງມີເຄື່ອງອື້ວທີ່ຖືກນຳໃຊ້ເພື່ອປອກເປືອກໝາກກາເຟແດງ ໃນຂະນະທີ່ເຄື່ອງສີກາເຟແມ່ນເພື່ອໃຫ້ໄດ້ໝາກຂາວ.



ຮູບທີ 4: ການຕາກກາເຟກາງ. ແຫຼ່ງທີ່ມາ: Galindo and Sallée 2008



ຮູບທີ 6: ການອື້ວກາເຟນ້ອຍ. ແຫຼ່ງທີ່ມາ: Galindo and Sallée 2008



ຮູບທີ 7: ການໝັກກາເຟນ້ອຍ: ລົງພາກສະໜາມວັນທີ 22 ພະຈິກ 2016. ຮູບຖ່າຍໂດຍ ມະລິພອນ ດວງພະຈັນ



ຮູບທີ 5: ການລ້າງໝາກກາເຟນ້ອຍທີ່ແຊ່ໄວ້. ແຫຼ່ງທີ່ມາ: ການລົງພາກສະໜາມວັນທີ 21 ພະຈິກ 2020. ຮູບຖ່າຍໂດຍ ມະລິພອນ ດວງພະຈັນ



ຮູບທີ 3: ການຕາກແດດກາເຟອາຣັບບິກາທີ່ລ້າງແລ້ວ. ແຫຼ່ງທີ່ມາ: ການລົງພາກສະໜາມວັນທີ 21 ພະຈິກ 2020. ຮູບຖ່າຍໂດຍ ມະລິພອນ ດວງພະຈັນ

# ການພັດທະນາແບບຍືນຍົງ

ໃນທົ່ວໂລກ, ຮູບແບບການຜະລິດແລະການບໍລິໂພກເປັນໄພຂົ່ມຂູ່ຕໍ່ສະຫວັດດີການແລະຄວາມຈະເລີນຮຸ່ງເຮືອງຂອງມະນຸດເຊັ່ນດຽວກັນກັບທຳມະຊາດແລະດິນຟ້າອາກາດ. ເພື່ອຮັບຮູ້ ແລະ ເຂົ້າໃຈກ່ຽວກັບຂະແໜງກາເຟໃນລາວ ໃນບໍລິບົດຂອງ (ບໍ່ແມ່ນ) ການຂັບເຄື່ອນແບບຍືນຍົງ ແລະ (ທ່າແຮງ) ໃນການນຳໄປສູ່ຄວາມຍືນຍົງ, ບາງຂໍ້ສັງເກດເບື້ອງຕົ້ນແມ່ນປະຕິບັດຕາມການພັດທະນາແບບຍືນຍົງ (SD). ສຳລັບແນວຄວາມຄິດແລະຄຳນິຍາມ ຂອງການພັດທະນາແບບຍືນຍົງແມ່ນມີຄວາມແຕກຕ່າງກັນ, ເຊິ່ງແຕ່ລະຢ່າງກໍມີທັງຂໍ້ດີແລະຂໍ້ຈຳກັດ. ໃນປີ 1987, ອົງການສະຫະປະຊາຊາດໄດ້ກຳນົດນິຍາມການພັດທະນາແບບຍືນຍົງໄວ້ໃນບົດລາຍງານ Brundtland ເຊິ່ງໄດ້ກຳນົດວ່າແມ່ນ "ການພັດທະນາທີ່ຕອບສະໜອງຄວາມຕ້ອງການຂອງຄົນໃນຮຸ່ນປະຈຸບັນ ໂດຍທີ່ບໍ່ບັ່ນທອນຄວາມອາດສາມາດຂອງຄົນຮຸ່ນຕໍ່ ໄປໃນການຕອບສະໜອງ ຄວາມຕ້ອງການຂອງພວກເຂົາ." (ອົງການສະຫະປະຊາຊາດ 1987) . ໃນປີ 2015, ສະຫະປະຊາຊາດໄດ້ຮັບຮອງເອົາວາລະ 2030, ເຊິ່ງກຳນົດ 17 ເປົ້າໝາຍການພັດທະນາແບບຍືນຍົງ (SDGs) (ອົງການສະຫະປະຊາຊາດ 2015) ແຕ່ ສປປລາວ ມີ 18 ເປົ້າໝາຍການພັດທະນາແບບຍືນຍົງ.




*ຮູບທີ 8: ເປົ້າໝາຍການພັດທະນາແບບຍືນຍົງ. ແຫຼ່ງທີ່ມາ: UNESCO 2015*

ສຳລັບເປົ້າຫມາຍທີ່ແຕກຕ່າງກັນໄດ້ເນັ້ນວ່າການພັດທະນາແບບຍືນຍົງ ເປັນຂະບວນການທີ່ມີຫຼາຍມິຕິ ເຊິ່ງມີການປະສານສົມທົບກັບການຂັບເຄື່ອນຂອງລະບົບນະໂຍບາຍທີ່ສະຫຼັບສັບຊ້ອນ (Leach et al. 2018; Pham-Truffert et al. 2020) . ການພັດທະນາແບບຍືນຍົງສາມາດຂັດແຍ້ງກັນ ແລະ ສາມາດມີຄວາມຂັດແຍ້ງ; ເຊິ່ງເປັນບໍລິບົດທີ່ລະ

ອຽດອ່ອນແລະມີລັກສະນະ ເປັນການພົວພັນທາງອຳນາດ. ໃນຄວາມໝາຍນັ້ນ, ການພັດທະນາແບບຍືນຍົງໂດຍທົ່ວໄປ ແລ້ວລວມມີການເຈລະຈາຕໍ່ລອງ ແລະ ຄວາມຂັດແຍ້ງກັນຂອງຜົນປະໂຫຍດ. ໃນຂະນະທີ່ ມັນສາມາດສ້າງໂອກາດ ສໍາລັບຂະແໜງການໃດຫນຶ່ງຫຼືກຸ່ມຂອງຜູ້ທີ່ມີສ່ວນໄດ້ສ່ວນເສຍ ເຊິ່ງຍັງສາມາດ ຮັບຜິດຊອບຕໍ່ຄວາມສ່ຽງ ລະຫວ່າງ ກັນອີກດ້ວຍ. ດັ່ງນັ້ນ, ບໍ່ແມ່ນເລື່ອງແປກເລີຍທີ່ຈະເຂົ້າໃຈ ຄວາມໝາຍຂອງການພັດທະນາແບບຍືນຍົງວ່າ ເປັນການຜະ ລິດການແລກປ່ຽນທາງດ້ານການຄ້າ ແລະ ມີຜົນປະໂຫຍດຮ່ວມກັນເຊັ່ນດຽວກັນກັບ ການສ້າງໃຫ້ມີຜູ້ໄດ້ ແລະຜູ້ສູນ ເສຍ.

## ຂົງເຂດທີ່ກະທົບ

ໃນພາກຕໍ່ໄປນີ້ຈະເວົ້າເຖິງດ້ານຕ່າງໆທີ່ແຕກຕ່າງກັນຂອງຕ່ອງໂສ້ມູນຄ່າກາເຟລາວ. ໃນນີ້ແບ່ງອອກເປັນ 5 ພາກຄື: (1) ເສດຖະກິດຂອງຂະ ແໜງກາເຟລາວ, (2) ສິ່ງແວດລ້ອມ - ການພົວພັນທາງດ້ານສັງຄົມ-ນິເວດວິທະຍາ, (3) ສະພາບຊີວິດການເປັນຢູ່ຂອງຜູ້ຜະລິດກາເຟໃນທ້ອງ ຖິ່ນ, (4) ການບໍລິຫານຄຸ້ມຄອງ ແລະ (5) ການເຊື່ອມໂຍງກັບ ປະຊາຄົມໂລກ. ແຕ່ລະສ່ວນຈະຊີ້ໃຫ້ເຫັນເຖິງບັນດາດ້ານ ແລະ ລັກສະນະຕ່າງໆ ຂອງຫົວຂໍ້ ແລະ ຈະຊ່ວຍວິເຄາະ ສະຖານະການຂອງຂະແໜງກາເຟຂອງ ສປປ ລາວ. ແນ່ນອນວ່າພາກສ່ວນຕ່າງໆເຫຼົ່ານີ້ມີຄວາມທັບຊ້ອນກັນ, ແລະ ບາງບັນຫາສາມາດກ່ຽວພັນກັບທຸກດ້ານໃນເວລາດຽວກັນ, ເຊິ່ງສະທ້ອນໃຫ້ເຫັນເຖິງຄວາມສະຫຼັບສັບ ຊ້ອນແລະການ ກວມເອົາຫົວຂໍ້ທັງ ຫມົດເຊັ່ນ: ຕ່ອງໂສ້ມູນຄ່າສິນຄ້າກະສິກໍາໃນທົ່ວໂລກ.

### ເສດຖະກິດຂອງຂະແໜງກາເຟລາວ

#### ເສດຖະກິດຂອງ ສປປ ລາວ

ສປປ ລາວມີລາຍໄດ້ລວມແຫ່ງຊາດ (GNI) 2.480 ໂດລາ, ໃນປີ 2020, ເຊິ່ງຈັດຢູ່ໃນກຸ່ມປະເທດ ທີ່ມີລາຍໄດ້ປານກາງ ທີ່ ຕໍ່າ, ອີງຕາມທະນາຄານໂລກ (2021) . ເມື່ອສົມທຽບກັນແລ້ວ, ສະວິສເຊີແລນ, ປະເທດທີ່ມີລາຍໄດ້ສູງ ມີ GNI ຕໍ່ຫົວຄົນ 84'310 ໂດລາ, ເສດຖະກິດຂອງລາວມີການ ຂະຫຍາຍຕົວ ໄວທີ່ສຸດປະເທດໜຶ່ງໃນອາຊີຕາເວັນອອກ. ຂະແໜງອຸດສາຫະ ກໍາທີ່ຂະຫຍາຍຕົວ, ການຜະລິດໄຟຟ້າ, ນໍ້າປະປາ ແລະ ການຄຸ້ມຄອງນໍ້າແມ່ນຕົວຂັບເຄື່ອນ ຫຼັກຂອງການຈະເລີນເຕີບ ໂຕທີ່ໝັ້ນຄົງນີ້ (ທະນາຄານແຫ່ງ ສປປລາວ 2021). ເຖິງແມ່ນວ່າການຄາດຄະເນມີຄວາມແຕກຕ່າງກັນ ເຊິ່ງເບິ່ງຄືວ່າມີ ຄວາມໝັ້ນໃຈທີ່ຈະເວົ້າວ່າຂະແໜງກະສິກຳມີການສະໜອງການຈ້າງງານຫຼາຍທີ່ສຸດ, ໂດຍມີຕົວເລກລະຫວ່າງ 73%




*ຮູບທີ 9: ການຖືດຖອຍຂອງ GDP ຂອງລາວໃນຂະແໜງການຕົ້ນ ຕໍ. ທີ່ມາ: ທະນາຄານແຫ່ງສປປລາວ 2001*

( ອີງການຂ່າວສານສູນກາງ 2021) ແລະ 31% ( ກະຊວງແຜນການແລະການລົງທຶນ 2017) ຂອງການຈ້າງງານທັງຫມົດ. ການມີຊ່ອງວ່າງກວ້າງລະຫວ່າງການຄາດຄະເນເຫຼົ່ານີ້ອາດຈະເປັນຍ້ອນລັກສະນະທີ່ບໍ່ເປັນທາງການ ໂດຍສ່ວນໃຫຍ່ ຂອງວຽກງານນີ້. ແນວໃດກໍດີ, ໃນດ້ານ GDP, ຂະແໜງກະສິກໍາກວມເອົາພຽງ 16,5% ຂອງຈໍານວນທັງໝົດ, ອຸດສາຫະກໍາ ແລະ ການບໍລິການກວມ 33,3% ແລະ 39,6% ຕາມລໍາດັບ (ທະນາຄານແຫ່ງສປປລາວ 2021) . ເຖິງຢ່າງໃດກໍ່ຕາມ, ຜະລິດຕະພັນທາງການກະເສດແມ່ນມີຄວາມສໍາຄັນຕໍ່ດຸນການຄ້າຂອງ ສປປ ລາວ. ຖັດຈາກແຫຼ່ງພະລັງງານໄຟຟ້ານໍ້າຕົກ ແລະ ແຮ່ທາດ, ຜະລິຕະພັນທາງການກະເສດ ຖືກຈັດເປັນອັນດັບທີ 3 ໃນການສົ່ງອອກທີ່ສໍາຄັນທີ່ສຸດທາງດ້ານມູນຄ່າຂອງການຄ້າ. ເມື່ອເວົ້າເຖິງຄູ່ຮ່ວມມືທາງດ້ານການຄ້າ, ການສົ່ງອອກ 64,81% ແມ່ນໄປຍັງບັນດາປະເທດອາຊຽນ, ພິເສດແມ່ນໄທ ແລະ ຫວຽດນາມ. ນອກຈາກອາຊຽນ, ຜູ້ນໍາເຂົ້າສິນຄ້າທີ່ສໍາຄັນທີ່ສຸດຂອງລາວແມ່ນ ສປ ຈີນ ເຊິ່ງກວມ 23,9%. ທັງສາມປະເທດນີ້ຍັງເປັນແຫຼ່ງນໍາເຂົ້າຕົ້ນຕໍຂອງລາວ, ປະເທດໄທເປັນຜູ້ນໍາຫນ້າທີ່ກວມເກືອບເຄິ່ງຫນຶ່ງຂອງ ການນໍາເຂົ້າທັງຫມົດ (49.66%, ສໍາລັບຕົວເລກເຫຼົ່ານີ້ແລະອື່ນໆອີກກ່ຽວກັບບັນຊີການຄ້າແມ່ນຈົ້ມູນມາຈາກສູນສະຖິຕິແຫ່ງຊາດ 2021, ຫນ້າ 149-154) .

ການຜະລິດກາເຟ

ໃນສະພາບການຂອງການເປີດຕົວແຜນງານນະໂຍບາຍກົນໄກເສດຖະກິດແບບໃໝ່ (NEM) ໃນປີ 1986, ກາເຟ*ອາຣາບິກາ*ຊະນິດໃໝ່ໄດ້ຖືກ ນໍາສະເໜີ ແລະ ຈໍາໜ່າຍຢູ່ເຂດພູພຽງບໍລະເວນໃນທ້າຍປີ 1990. ນັບແຕ່ຕົ້ນຊຸມປີ 2000, ຊາວກະສິກອນໃນທ້ອງຖິ່ນຫຼາຍແຫ່ງໄດ້ມີການຫັນ ມາປູກກາເຟຊະນິດໃໝ່ ແລະ ຢຸດການຜະລິດເຂົ້າ ເນື່ອງຈາກກາເຟ*ອາຣາບິກາ* ຊະນິດໃໝ່ມີແຮງງານຫຼາຍ. ໃນໄລຍະການພັດທະນາດັ່ງກ່າວ, ເນື້ອທີ່ເກັບກ່ຽວກາເຟ ທັງໝົດໄດ້ເພີ່ມຂຶ້ນຈາກ 50,600 ເຮັກຕາໃນປີ 2010 ເປັນ 93,300 ເຮັກຕາໃນປີ 2017, ໃນຂະນະທີ່ຜົນຜະລິດ ລວມໄດ້ເພີ່ມຂຶ້ນສາມເທົ່າຈາກ 46,300 ໂຕນ ເປັນ 150,800 ໂຕນ (ສໍານັກງານສະຖິຕິລາວ 2018; 2011) .

ໃນການຜະລິດກາເຟ, ແຮງງານມີລັກສະນະທີ່ແຕກຕ່າງກັນ (Seneduangdeth et al. 2018) : ການຈ້າງງານຕົນເອງ, ການຈ້າງແຮງງານ ຕາມລະດູການ, ການຈ້າງແຮງງານແບບລາຍວັນ, ການຈ້າງແຮງງານແບບເປັນລາຍເດືອນ, ການຈ່າຍເງິນແບບລວມຍອດ ຂຶ້ນກັບຜົນງານຂອງ ວຽກ (ແມ່ນແຮງງານທີ່ ໄດ້ຮັບຄ່າຈ້າງຕາມນໍ້າຫນັກຂອງໝາກກາເຟທີ່ເກັບໄດ້), ແບບສັນຍາຈ້າງ ແລະ ການຈ້າງງານແບບຖາວອນ . ນອກຈາກການຜະລິດກາເຟດ້ວຍຕົນເອງແລ້ວ ເຊິ່ງໝາຍເຖິງຊາວກະສິກອນທີ່ຜະລິດກາເຟດ້ວຍຕົນເອງ, ການຜະລິດກາເຟຍັງສ້າງໂອກາດການຈ້າງງານໃຫ້ແກ່ປະຊາຊົນໃນທ້ອງຖິ່ນແລະແຮງງານເຄື່ອນຍ້າຍຈາກແຂວງໃກ້ຄຽງ. ເຈົ້າຂອງສວນ ແລະ ບໍລິສັດກາເຟຂະໜາດໃຫຍ່ຈ້າງແຮງງານ ສໍາລັບ ການເກັບໝາກເກາເຟ, ການເສຍຫຍ້າ, ແລະ ການໃສ່ຝຸ່ນໃນສວນກາເຟ. ໃນຂະນະທີ່ວຽກເຫຼົ່ານີ້ສ້າງແຫຼ່ງລາຍຮັບທີ່ສໍາຄັນ, ເງື່ອນໄຂໃນການ ເຮັດວຽກກໍມີຄວາມແຕກຕ່າງກັນຢ່າງຫຼວງຫຼາຍ.

ກົນໄກຂອງຕະຫຼາດກາເຟໃນທົ່ວໂລກ

ພໍ່ຄ້າກາເຟລາວຂາຍກາເຟຂອງຕົນໃນຕະຫຼາດສາກົນ, ເຊິ່ງລາຄາຂອງມັນແມ່ນເປັນເງິນໂດລາ (USD). ເນື່ອງຈາກພວກເຂົາພຽງພຽງແຕ່ເປັນຜູ້ປະກອກອບການນ້ອຍໆເທົ່ານັ້ນໃນຕະຫຼາດໂລກ, ຜູ້ຜະລິດກາເຟລາວຈຶ່ງມີອຳນາດໃນການຕໍ່ລອງໜ້ອຍ.

ໂດຍອີງຕາມປະຫວັດສາດ, ການເໜັງຕີງຂອງລາຄາກາເຟເປັນສ່ວນໜຶ່ງຂອງເກມການຫຼິ້ນສະເໝີ, ຕົວຢ່າງການກະທົບຂອງສະພາບອາກາດທີ່ບໍ່ຄາດຄິດ. ຢ່າງໃດກໍຕາມ, ນັບຕັ້ງແຕ່ຕົ້ນສະຕະວັດທີ 21 ການປ່ຽນແປງເລັກໜ້ອຍອຍໃນໂຄງສ້າງຂອງຕະຫຼາດກາເຟທົ່ວໂລກໄດ້ເກີດຂຶ້ນ. ຄຸນ ນະພາບ ແລະ ປະລິມານຂອງກາເຟເພີ່ມຂຶ້ນ (ໂດຍສະເພາະຈາກປະເທດເບູຊິນ ແລະ ຫວຽດນາມ ເຊິ່ງເປັນສອງປະເທດສົ່ງອອກກາເຟລາຍໃຫຍ່ທີ່ສຸດ), ເຮັດໃຫ້ຕະຫຼາດມີສະບຽງອາຫານເກີນຂອບເຂດ, ເຊິ່ງເຮັດໃຫ້ລາຄາກາເຟໃນທົ່ວໂລກຫຼຸດລົງ. ຜົນສະທ້ອນຂອງການຫຼຸດລົງຂອງລາຄາ ກາເຟເປັນສ່ວນແບ່ງຂະໜາດນ້ອຍຂອງລາຄາຂາຍຍ່ອຍທີ່ປະເທດຜູ້ຜະລິດໄດ້ຮັບ. ສິ່ງນີ້ເກີດມາຈາກ 2 ປັດໄຈຄື: ອັນທີໜຶ່ງຄືອຸດສາຫະກຳການຂົ້ວ ແລະ ການຂາຍຍ່ອຍກາເຟ ເຊິ່ງໄດ້ກຳໄລດ້ວຍການພັດທະນາຜະລິດຕະພັນໃໝ່ ແລະ ນຳໃຊ້ປະໂຫຍດຈາກກິດຈະກຳການເພີ່ມມູນຄ່າ ຕ່າງໆເຊັ່ນ: ການຕະຫຼາ, ການສ້າງຍີ່ຫໍ້, ການສ້າງຄວາມແຕກຕ່າງ ແລະ ລິດຊາດ. ສ່ວນອັນທີສອງແມ່ນອົງປະກອບທີ່ບໍ່ແມ່ນກາເຟ ເຊິ່ງລວມຢູ່ໃນລາຄາຂາຍຍ່ອຍຂອງກາເຟເຊັ່ນ: ຄ່າຈ້າງແຮງງານ, ການຫຸ້ມຫໍ່ ແລະ ການຕະຫຼາດ, ເຊິ່ງໄດ້ມີການເຕີບໃຫຍ່ຂຶ້ນແລະ ປະຈຸບັນເປັນຕົວແທນຂອງສ່ວນແບ່ງທີ່ສຳຄັນ ຂອງລາຄາຂາຍຍ່ອຍທັງຫມົດຫຼາຍກ່ວາກາເຟຕົວຈິງ. ສິ່ງທີ່ຫນ້າສົນໃຈກໍຄືບັນດາປະເທດທີ່ນຳ ເຂົ້າກາເຟມີລາຍໄດ້ຫຼາຍຕື້ໂດລາຕໍ່ປີຈາກການເກັບພາສີອາກອນ. ໃນບາງປະເທດເຫຼົ່ານີ້, ພຽງແຕ່ພາສີຢ່າງດຽວກໍເກືອບ ເທົ່າກັບລາຍຮັບຂອງກາເຟທີ່ປະເທດຜູ້ຜະລິດໄດ້ຮັບ.

ສະພາບແວດລ້ອມ - ການພົວພັນກັນທາງດ້ານສັງຄົມ-ນິເວດວິທະຍາ

ທີ່ດິນ – ເປັນຊັບພະຍາກອນທີ່ມີຄວາມຕ້ອງການ

ໂດຍອີງຕາມລັດຖະບານ (ກົດໝາຍວ່າດ້ວຍທີ່ດິນຂອງສປປ ລາວ, 2018), ທີ່ດິນໃນລາວເປັນຂອງຄົນລາວທັງໝົດເຊິ່ງເປັນມໍລະດົກຂອງຊາດ. ຢ່າງໃດກໍ່ຕາມ, ຄວາມກົດດັນກ່ຽວກັບທີ່ດິນກໍຍັງມີຢູ່ ເນື່ອງຈາກມັນເປັນຊັບພະຍາກອນທີ່ມີຄວາມຕ້ອງການສູງທີ່ພາກສ່ວນຕ່າງໆທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດຕ່າງກໍມີການຈັບຈ້ອງ. ໃນສະພາບການດັ່ງກ່າວ, ການສັນຫາທີ່ດິນໂດຍຜ່ານການໂອນກຳມະສິດໃນການນຳໃຊ້ທີ່ດິນໃຫ້ນັກລົງທຶນພາຍໃນ ຫຼືຕ່າງປະເທດກາຍເປັນບັນຫາທີ່ສຳຄັນ (Nanhthavong et al. 2021) . ໃນໄລຍະສອງທົດສະວັດຜ່ານມາ, ລັດຖະບານແຫ່ງ ສປປ ລາວ ໄດ້ເອົາໃຈໃສ່ຕໍ່ກັບຂໍ້ຕົກລົງການນຳໃຊ້ທີ່ດິນດັ່ງກ່າວຢ່າງຈິງຈັງ ແລະ ໄດ້ອອກສຳປະທານຫຼາຍສະບັບ. ເປົ້າໝາຍ ຕົ້ນຕໍແມ່ນເພື່ອດຶງດູດນັກລົງທຶນ ແລະ ສ້າງມູນຄ່າທາງດ້ານເສດຖະກິດຈາກ "ການຫັນທີ່ດິນເປັນທຶນ" (Kenney-Lazar, Dwyer, and Hett 2018) . ຜູ້ນຳສະເໜີນະໂຍບາຍດັ່ງກ່າວໄດ້ຄາດຫວັງ ວ່າຂໍ້ຕົກລົງດັ່ງ

ກ່າວຈະກະຕຸກຊຸກຍູ້ການສ້າງວຽກເຮັດງານທຳ ແລະ ການສ້າງຖານການຕະຫຼາດ ແລະ ໂຄງລ່າງພື້ນຖານແບບໃໝ່ ທີ່ຈະສົ່ງຜົນໃຫ້ລາຍຮັບຂອງລັດເພີ່ມຂຶ້ນ (Nanhthavong et al. 2021; Hett et al. 2020) . ເຖິງຢ່າງໃດກໍ່ຕາມ ໃນໄລຍະທີ່ຜ່ານມານີ້, ຄວາມຮັບຮູ້ກ່ຽວກັບຜົນສະທ້ອນທາງລົບໄດ້ເພີ່ມຂຶ້ນ ແລະ ລັດຖະບານໄດ້ເລີ່ມມີການຄຸ້ມ ຄອງ ແລະ ຈຳກັດບາງປະເພດຂອງຂໍ້ຕົກລົງການນຳໃຊ້ທີ່ດິນ (Nanhthavong et al. 2021; Hett et al. 2020) . ຜົນກະທົບຂອງສັນຍາ ທີ່ດິນເຫຼົ່ານີ້ແມ່ນມີຂໍ້ຂັດແຍ່ງ: ດ້ານໜຶ່ງກໍຄືການສ້າງໂອກາດໃນການຈ້າງງານໃຫມ່ ເຊິ່ງເປັນ ແຫຼ່ງລາຍຮັບຂອງຊາວບ້ານ. ໃນທາງກົງກັນຂ້າມ, ເງື່ອນໄຂໃນການຈ້າງງານຕາມລະດູການ ແລະ ແບບຊົ່ວຄາວແມ່ນ ຍັງມີຂໍ້ຄ້າງຄາແລະຂໍ້ຂັດແຍ່ງເນື່ອງຈາກການຈ່າຍເງິນທີ່ຊັກຊ້າ ແລະ ການລະເມີດສັນຍາການ ຈ່າຍເງິນທີ່ເຫັນ ເປັນປົກ ກະຕິ (Hett et al. 2020) . ນອກຈາກນັ້ນ, ລາຍຮັບຈາກເງິນເດືອນເຫຼົ່ານີ້ກໍບໍ່ພຽງພໍ, ໂດຍສະ ເພາະເມື່ອແຫຼ່ງລາຍຮັບ ອື່ນໆເຊັ່ນ: ຟືນ ແລະ ການປູກຝັງແບບລ້ຽງຊີບກໍ່ບໍ່ສາມາດດຳເນີນໄດ້ ເຊິ່ງເປັນຜົນມາຈາກການຈັດການທີ່ດິນຂອງເອກະ ຊົນແບບບໍ່ຍືນຍົງ. ສິ່ງນີ້ເປັນບັນຫາ, ເພາະວ່າການຍຶດເອົາທີ່ດິນຂະໜາດໃຫຍ່ມັກຈະມີການປະຕິບັດການຄຸ້ມຄອງນຳ ໃຊ້ທີ່ດິນຢ່າງເຂັ້ມຂຸ້ນ ເຊິ່ງ ກໍ່ໃຫ້ເກີດມົນລະພິດທາງດ້ານສິ່ງແວດລ້ອມຈາກສານເຄມີທາງການກະສິກຳເຊັ່ນ: ຝຸ່ນ, ຢາ ປາບສັດຕູພືດ ຫຼື ຢາຂ້າຫຍ້າ. ນອກຈາກນັ້ນ, ມັນຍັງສົ່ງຜົນກະທົບທາງລົບຕໍ່ລະດັບນ້ຳທີ່ຫຼຸດລົງ ແລະ ຄຸນນະພາບຂອງ ນ້ຳໃນແມ່ນ້ຳ ແລະ ຫ້ວຍຮ່ອງຄອງບຶງ (Nanhthavong et al. 2021) . ຢ່າງໃດກໍຕາມ, ຫນຶ່ງໃນຜົນກະທົບທີ່ຮ້າຍແຮງທີ່ສຸດຂອງຂໍ້ຕົກລົງເຫຼົ່ານີ້ແມ່ນຄວາມຂັດແຍ້ງກ່ຽວກັບທີ່ດິນ.

ການຕົກລົງກ່ຽວກັບທີ່ດິນມັກຈະ ເກີດຂຶ້ນຢູ່ໃນເຂດທີ່ມີຜູ້ນຳໃຊ້ທີ່ດິນໃນທ້ອງຖິ່ນທີ່ບໍ່ໄດ້ມີໃບຕາດິນຢ່າງເປັນທາງການ ແຕ່ໄດ້ມີການນຳໃຊ້ທີ່ດິນຕາມຮີດຄອງປະເພນີຂອງທ້ອງ ຖິ່ນ. ໃນກໍລະນີທີ່ຮ້າຍແຮງທີ່ສຸດ, ການຕົກລົງກ່ຽວກັບທີ່ດິນ ນຳໄປສູ່ການຍົກຍ້າຍແລະຖືກໄລ່ອອກຈາກພື້ນທີ່ຂອງຊາວບ້ານໃນທ້ອງຖິ່ນ. ສິ່ງເຫຼົ່ານີ້ໄດ້ສົ່ງຜົນກະທົບຢ່າງໜັກໜ່ວງ ຕໍ່ຊີວິດການເປັນຢູ່ຂອງຊາວບ້ານ ເນື່ອງຈາກຊີວິດການເປັນຢູ່ຂອງພວກເຂົາ ແມ່ນອາໄສທີ່ດິນ ແລະ ຊັບພະ ຍາກອນທຳມະຊາດເປັນສ່ວນໃຫຍ່ (Nanhthavong et al. 2021) .

## ການທ່ອງທ່ຽວ

ການທ່ອງທ່ຽວໃນລາວແມ່ນມີການເພີ່ມຂຶ້ນຢ່າງຕໍ່ເນື່ອງໃນຫຼາຍທົດສະວັດທີ່ຜ່ານມາ,
ຈົນກະທັ້ງມີການແຜ່ລະບາດຂອງພະຍາດ Covid-19. ມາຮອດປະຈຸບັນ ສັດສ່ວນຕະຫຼາດທີ່ໃຫຍ່ທີ່ສຸດໃນອາຊີຕາເວັນ ອອກສຽງໃຕ້ແມ່ນກວມເອົາ 67% ຂອງນັກທ່ອງທ່ຽວທີ່ເດີນທາງມາ. ເຖິງຢ່າງໃດກໍຕາມ, ສປປ ລາວ ຍັງມີລາຍຮັບສູງ ສຸດໃນຂະແໜງການທ່ອງທ່ຽວທີ່ມີນັກທ່ອງທ່ຽວຈາກສາທາລະນະລັດປະຊາຊົນຈີນ (ສປຈີນ) ເຊິ່ງບໍ່ພຽງແຕ່ອີງໃສ່ຈຳ ນວນຄົນທີ່ເດີນທາງໄປມາເທົ່ານັ້ນ, ແຕ່ຍັງໝາຍເຖິງບັນດາໂຄງການກໍ່ສ້າງພື້ນຖານໂຄງລ່າງຂອງ ສປຈີນ ພາຍໃຕ້ ຂໍ້ຕົກ ລົງແຜນງານລິເລີ່ມຄືໜຶ່ງແລວທາງໜຶ່ງເສັ້ນທາງ ເຊິ່ງເຊື່ອມຕໍ່ສອງປະເທດດ້ວຍເສັ້ນທາງລົດໄຟຍາວກວ່າ 400 ກິໂລ ແມັດ. ຈຳນວນນັກທ່ອງທ່ຽວ ແລະ ລາຍຈ່າຍ *ຕໍ່ຫົວຄົນ* ແມ່ນຂຶ້ນກັບສະພາບອາກາດຂອງລົມມໍລະສຸມ ເຊິ່ງເປັນຊ່ວງ ທີ່ນັກທ່ອງທ່ຽວບໍ່ຫຼາຍ. ຈຸດນີ້ແມ່ນຈຸດທີ່ຂະແໜງການກາເຟເຂົ້າມາມີບົດບາດອີກຄັ້ງ: ກຸ່ມກາເຟຈຳນວນໜຶ່ງທີ່ໄດ້ຮັບ

ການສ້າງຕັ້ງຂຶ້ນແລະເລັງເປົ້າໝາຍດ້ານການຕະຫຼາດຢູ່ໃນທ້ອງຖິ່ນ ກໍຫວັງວ່າຂະແໜງການທ່ອງທ່ຽວທີ່ຟື້ນຟູຈະຊ່ວຍ ເພີ່ມຍອດຂາຍ. ໃນນີ້, ທະນາຄານພັດທະນາອາຊີ (ADB) ໄດ້ມີຂໍ້ໂຕ້ຖຽງກ່ຽວກັບຂໍ້ໄດ້ປຽບຂອງການຫັນປ່ຽນໄປ ສູ່ຮູບແບບການທ່ອງທ່ຽວທີ່ເປັນມິດກັບສິ່ງແວດລ້ອມຫຼາຍຂຶ້ນເຊັ່ນການທ່ອງທ່ຽວແບບກະສິກຳ, ດ້ວຍການໂຕ້ຖຽງວ່າ ການປ່ຽນແປງ ດັ່ງກ່າວຈະນຳໄປສູ່ການເພີ່ມຂຶ້ນດ້ານຊີວິດການເປັນຢູ່ຂອງຜູ້ທີ່ມີສ່ວນຮ່ວມ(Anderson et al. 2021).

## ໃບຢັ້ງຢືນປອດສານພິດ

ນັບຕັ້ງແຕ່ຊຸມປີ 1990, ໃນເວລາທີ່ອົງການຈັດຕັ້ງສາກົນທີ່ບໍ່ຂຶ້ນກັບລັດຖະບານເຊັ່ນ: ອົງການ Helvetas ໄດ້ເລີ່ມຕົ້ນຍົກປະເດັນກ່ຽວກັບເລື່ອງນີ້, ຈາກນັ້ນການຜະລິດກາເຟອິນຊີໄດ້ຮັບການສົ່ງເສີມເລື້ອຍມາ. ໃນປີ 2005, ກົມກະສິກຳໄດ້ສ້າງມາດຕະຖານອິນຊີ ຂອງ ລາວ ເຊິ່ງກຳນົດຄູ່ມືແນະນຳໃນການໄດ້ຮັບການຢັ້ງຢືນ. ໃນຄູ່ມືດັ່ງກ່າວກວມ ເອົາບັນຫາເລື່ອງການຜະລິດອິນຊີ, ການອະນຸຮັກທີ່ດິນ, ການປະເມີນຜົນ, ການກວດກາ, ການຄຸ້ມຄອງ, ການຂົນສົ່ງ, ແລະ ຂໍ້ກຳນົດການຕິດສະຫຼາກ. ໃນຂະນະທີ່ ມີຄວາມພະ ຍາຍາມເພີ່ມຂຶ້ນຈາກຜູ້ຜະລິດໃນການໄດ້ຮັບການຢັ້ງຢືນເພື່ອປະຕິບັດຕາມຄູ່ມືແນະນຳການຢັ້ງຢືນກໍເຮັດໃຫ້ມີຄ່າໃຊ້ຈ່າຍທີ່ສູງຂຶ້ນ, ຜະລິດຕະພັນກາເຟ ທີ່ໄດ້ຮັບການຢັ້ງຢືນຈະໄດ້ຮັບລາຄາທີ່ສູງໃນຕະຫຼາດສາກົນ, ເຮັດໃຫ້ສິ່ງນີ້ກາຍເປັນ ທາງເລືອກທາງດ້ານການເງິນ. ຢ່າງໃດກໍຕາມ, ສຳລັບຜູ້ຜະລິດເອງ ກໍມີອຸປະສັກຫຼາຍທີ່ເຂົ້າມາ. ເມື່ອບໍ່ດົນມານີ້, ອົງການ UNCTAD (2020) ໄດ້ທຳການສຳຫຼວດຖາມຜູ້ຜະລິດກາເຟລາວ ກ່ຽວກັບອຸປະສັກຕ່າງໆ ທັງໃນຂອດການຕັດ ສິນໃຈຂໍສະຫຼາກ ແລະ ການຈັດຕັ້ງປະຕິບັດ ເຊິ່ງຜົນໄດ້ຮັບແມ່ນໄດ້ສະແດງໃຫ້ເຫັນຢູ່ໃນຮູບທີ 13 ແລະ 14 .

*ຮູບທີ10: ໂລໂກ້ປອດສານພິດລາວ*




*ຮູບທີ 13: ອຸປະສັກກ່ຽວກັບທັດສະນະຄະຕິ ແລະ ການຕັດສິນໃຈ, ແຫຼ່ງທີ່ມາ: UNCTAD 2020*




*ຮູບທີ 14: ອຸປະສັກກ່ຽວກັບຂັ້ນຕອນໃນການຈັດຕັ້ງປະຕິບັດ, ແຫຼ່ງທີ່ມາ: UNCTAD 2020*

## ສະພາບຊີວິດການເປັນຢູ່ຂອງຜູ້ຜະລິດກາເຟໃນທ້ອງຖິ່ນ

### ສະຖານະການກ່ຽວກັບຄ່າຈ້າງ

ສໍາລັບເງິນຄ່າແຮງຂັ້ນຕໍ່າຂອງ ສປປ ລາວ ຢູ່ທີ່ 1.1 ລ້ານລ້ານກີບຕໍ່ເດືອນ (Falak 2021) . ອັດຕາຄ່າຈ້າງຂອງການຜະລິດກາເຟໃນສວນກາເຟຂອງລາວແມ່ນຕໍ່າ, ໂດຍສະເລ່ຍເງິນຄ່າຈ້າງແມ່ນ 50'000 ກີບ/ມື້ ຫຼື 1000 ກີບ/ກິໂລກຣາມຂອງກາເຟທີ່ເກັບໄດ້, ເຊິ່ງເທົ່າກັບ CHF 4.11 ແລະ CHF 0.08 ຕາມລໍາດັບ. ແນວໃດກໍ່ຕາມ, ຖ້າພວກເຮົາ ຕ້ອງການການປຽບທຽບທີ່ມີຄວາມຫມາຍ ໃນແງ່ຂອງກໍາລັງການຊື້, ພວກເຮົາ ຕ້ອງກໍານົດປັດໄຈກ່ຽວກັບ ຄວາມແຕກຕ່າງຂອງລະດັບລາຄາ. ອີງຕາມທະນາຄານໂລກ (2020, ຕາຕະລາງ 2.1) , ລາຄາໃນປະເທດສະວິດເຊີ ແລນແມ່ນຫຼາຍ ກວ່າລາຄາຢູ່ໃນລາວ ໂດຍມີປັດໄຈແມ່ນ 3.589[2]. ດັ່ງນັ້ນ, ສໍາລັບການເຮັດວຽກຕໍ່ມື້, ເງິນເດືອນຂອງແຮງງານ ກາເຟໃນລາວແມ່ນເທົ່າກັບກໍາລັງການຊື້ໂດຍສະເລ່ຍເທົ່າກັບ 14.75 CHF ໃນສະວິສເຊີແລນ. ສົມມຸດວ່າເດືອນໜຶ່ງເຮັດວຽກຈໍານວນ 20 ມື້, ກໍຈະໄດ້ ປະມານ CHF 295 ໃນໄລຍະເວລາດຽວກັນ. ສໍາລັບຕົວເລກຊີ້ບອກນີ້ ແນ່ນອນວ່າບໍ່ໄດ້ໃຊ້

[2] 179.8/50.1 = 3.58882236

ກັບແຮງງານຮັບຈ້າງທັງໝົດຄືກັນ. ສະຖານະການສໍາລັບແຮງງານຊົ່ວຄາວແລະຕາມລະດູການມັກຈະຕໍ່າກວ່ານີ້ອີກ, ໂດຍນາຍຈ້າງມັກຈະສະເໜີໃຫ້ພວກເຂົາແຕ່ບ່ອນຢູ່ແລະບ່ອນກິນ.

ບົດບາດຍິງ-ຊາຍໃນການຜະລິດກາເຟ

ແມ່ຍິງເປັນສ່ວນໜຶ່ງທີ່ສຳຄັນຂອງຂະແໜງກະສິກຳໃນ ສປປ ລາວ, ລວມມີກຳລັງແຮງງານກະສິກຳຫຼາຍກວ່າ 50 ເປີເຊັນ ແລະ ປະກອບສ່ວນ ສຳຄັນເຂົ້າໃນການຜະລິດກະສິກຳທັງໝົດ. ເຖິງວ່າແມ່ຍິງຈະມີສ່ວນຮ່ວມຢ່າງຫຼວງຫຼາຍໃນວຽກງານກະສິກຳ, ແຕ່ແມ່ຍິງຍັງປະສົບກັບສິ່ງກີດ ຂວາງທີ່ພົ້ນເດັ່ນ ແລະ ຍືດເຍື້ອໃນການເຂົ້າຮ່ວມຢ່າງເຕັມສ່ວນໃນຂະແໜງຊົນນະບົດ (FAO 2018) . ໂດຍທົ່ວໄປແລ້ວ, ແມ່ຍິງລາວຕ້ອງໄດ້ຕໍ່ ສູ້ກັບການຮູ້ໜັງສື ແລະ ລະດັບການສຶກສາທີ່ຕໍ່າກວ່າເພດຊາຍ. ພວກເຂົາປະເຊີນກັບຂໍ້ຈຳກັດໃນການເຄື່ອນໄຫວຕ່າງໆເຊັ່ນດຽວກັນກັບຄວາມ ຫຍຸ້ງຍາກໃນການເຂົ້າເຖິງຂໍ້ມູນຂ່າວສານທີ່ກ່ຽວຂ້ອງສໍາລັບກິດຈະກໍາການກະສິກໍາຂອງເຂົາເຈົ້າ, ສິ່ງທີ່ນໍາໃຊ້ເຂົ້າໃນການກະສິກໍາ, ແລະ ຊັບພະຍາກອນທາງດ້ານການເງິນເຊັ່ນການຂໍເງິນກູ້. ນອກຈາກນັ້ນ, ໂດຍປົກກະຕິແລ້ວ ແມ່ຍິງລາວຈະແບກຫາບພາລະສອງເທົ່າຂອງການເຮັດວຽກໃນສວນ ແລະ ວຽກງານການຈະເລີນພັນໃນກິດຈະວັດປະຈໍາວັນ. ນອກຈາກວຽກງານກະສິກໍາແລ້ວ, ສັງຄົມຍັງໄດ້ມອບໝາຍວຽກງານດ້ານການຈະເລີນພັນເຊັ່ນວ່າວຽກງານການດູແລ ແລະ ວຽກເຮືອນວຽກຊານໃຫ້ເປັນຄວາມຮັບຜິດຊອບຂອງແມ່ຍິງອີກດ້ວຍ. ສໍາລັບການແບ່ງງານ ແລະ ການຕັດສິນໃຈ, ການເຂົ້າຮ່ວມລະດັບສູງຂອງແມ່ຍິງໃນຂົງເຂດຜະລິດ ແລະ ການຈະເລີນພັນ ກໍບໍ່ໄດ້ເຮັດໃຫ້ຄວາມເຂັ້ມແຂງຂອງແມ່ຍິງຖືກສົ່ງເສີມແຕ່ຢ່າງໃດ. ການເຮັດວຽກສອງເທົ່າຂອງແມ່ຍິງເປັນການສະແດງໃຫ້ເຫັນເຖິງຄວາມບໍ່ສະເໝີພາບກັນລະຫວ່າງຍິງ-ຊາຍ ແລະ ເປັນອຸປະສັກໃນການສ້າງຄວາມເຂັ້ມແຂງຂອງແມ່ຍິງ ເນື່ອງຈາກວ່າມັນໄດ້ວາງຂໍ້ຈໍາກັດຢ່າງທາງດ້ານເວລາ ແລະ ຄວາມອາດສາມາດຂອງແມ່ຍິງໃນການ ຈັດສັນຊີວິດຂອງພວກເຂົາ ແລະ ການເຄື່ອນໄຫວຢູ່ນອກບ້ານ. ໃນຂະນະທີ່ແມ່ຍິງມີລະດັບການຕັດສິນໃຈທີ່ສູງຂຶ້ນກ່ຽວກັບຄ່າໃຊ້ຈ່າຍປະຈໍາວັນໃນຄົວເຮືອນແລະຄອບຄົວແລ້ວ, ການຕັດສິນໃຈໃນຂົງເຂດກະສິກໍາສ່ວນຫຼາຍແມ່ນຜູ້ຊາຍທີ່ຕັດສິນໃຈກ່ຽວກັບປັດໄຈການກະສິກໍາ, ການປູກພືດ ແລະ ການກູ້ຢືມທາງດ້ານການເງິນ (Douangphachanh et al. 2021).

## ສະຫະກອນ

ສະຫະກອນກາເຟໃນພາກໃຕ້ຂອງລາວແມ່ນສະມາຄົມແບບອິນຊີທີ່ໄດ້ຮັບການຢັ້ງຢືນຢ່າງເປັນທາງການ, ເຊິ່ງກວມເອົາສະມາຄົມຕ່າງໆເຊັ່ນ: ສະຫະກອນຜູ້ຜະລິດກາເຟພູພຽງບໍລະເວນ , ສະຫະກອນຈິງໃຈກາເຟ, ແລະ ສະຫະກອນ ໃຈກາເຟ. ການຕະຫຼາດ ແລະ ການສົ່ງອອກກາເຟອິນຊີ, ສະຫະກອນດັ່ງກ່າວເຫຼົ່ານີ້ໄດ້ເຊື່ອມໂຍງຊາວສວນທ້ອງຖິ່ນໃນລະດັບບ້ານເຂົ້າກັບຕະຫຼາດໂລກ. ເພື່ອເຂົ້າເຖິງຕະຫຼາດໂລກ, ສະຫະ ກອນມັກຈະຮ່ວມມືກັບອົງການຈັດຕັ້ງສາກົນທີ່ ບໍ່ຂຶ້ນກັບລັດຖະບານ (INGOs). ສະຫະກອນແມ່ນປະກອບດ້ວຍສະມາຊິກຊາວສວນຂອງພວກເຂົາ ເຊິ່ງເຂົາເຈົ້າເປັນຕົວແທນ

ບໍ່ພຽງແຕ່ຢູ່ໃນຊ່ອງທາງຕະຫຼາດສາກົນເທົ່ານັ້ນ ແຕ່ຍັງຢູ່ໃນລະດັບລັດຖະບານທີ່ຢູ່ໃນສ່ວນຂອງການປະສານງານຂອງຂະແໜງກາເຟຂອງລາວ. ສະຫະກອນໄດ້ສະໜອງລາຄາການຊື້ທີ່ມີຄວາມຮັບປະກັນໃຫ້ສະມາ ຊິກຂອງພວກເຂົາ ເຊິ່ງມາຈາກລາຄາສະ ເລ່ຍຂອງຕະຫຼາດໂລກ, ລວມທັງການເໜັງຕີງຂອງລາຄາ. ພວກເຂົາຈະຈ່າຍເງິນໃຫ້ກັບຊາວສວນ ໜຶ່ງ ຫຼື ສອງຄັ້ງຕໍ່ປີ. ເພື່ອຊຸກຍູ້ການຜະລິດກະສິກໍາອິນຊີ, ທາງສະຫະກອນມີມາດຕະຖານສູງ ແລະ ເຂັ້ມງວດທີ່ຊາວສວນຕ້ອງຜະລິດກາເຟໃຫ້ປອດສານພິດ, ຝຸ່ນເຄມີ, ຢາຂ້າຫຍ້າ, ຢາປາບສັດຕູພືດ. ໂດຍປົກກະຕິແລ້ວ, ສະຫະກອນຈະມີການກວດສອບເບິ່ງວ່າສະມາຊິກຂອງພວກເຂົາປະຕິບັດຕາມຂໍ້ກໍານົດດັ່ງກ່າວຄືແນວໃດ.
ສະມາຊິກຂອງສະຫະກອນມີຄວາມຊາບຊຶ້ງຕໍ່ກັບການມີລາຄາທີ່ໝັ້ນຄົງ, ມີຄວາມສາມັກຄີ ແລະ ມີການປະສານງານກັນລະຫວ່າງຕົວແບບຊາວ ບ້ານທີ່ສະຫະກອນໄດ້ສົ່ງເສີມ. ຢ່າງໃດກໍ່ຕາມ, ການເປັນສະມາຊິກແມ່ນໄດ້ໃຊ້ເວລາຫຼາຍຍ້ອນວ່າສະມາຊິກຕ້ອງລົງທຶນວຽກພິເສດເພື່ອຮັກສາ ການດໍາເນີນງານຂອງອົງກອນ. ນອກຈາກນັ້ນ, ເຖິງແມ່ນວ່າກົນໄກການຈ່າຍເງິນຈະຮັບປະກັນຄວາມຫມັ້ນຄົງ, ແຕ່ມັນກໍມີຜົນສະທ້ອນ ທີ່ທ້າທາຍບາງຢ່າງ: ຢ່າງທີໜຶ່ງ, ອາດຈະມີກໍລະນີທີ່ວ່າລາຄາກາເຟໃນຕະຫຼາດໂລກອາດຈະສູງກວ່າລາຄາທີ່ສະຫະກອນສະເຫນີໃຫ້. ຢ່າງທີສອງ, ການໄດ້ຮັບການຈ່າຍເງິນພຽງແຕ່ຫນຶ່ງຫຼືສອງຄັ້ງຕໍ່ປີແມ່ນມີຄວາມຫຍຸ້ງຍາກ. ດັ່ງນັ້ນ, ຊາວສວນຈໍານວນໜຶ່ງຈຶ່ງເລືອກ ທີ່ ຈະຂາຍກາເຟໃຫ້ກັບພໍ່ຄ້າຄົນກາງແທນທີ່ຈະໃຫ້ສະຫະກອນ ເຖິງແມ່ນວ່າສະຫະກອນຈະໃຫ້ລາຄາທີ່ສູງກວ່າກໍ່ຕາມ, ເນື່ອງຈາກວ່າພວກເຂົາຢາກໄດ້ຮັບເງິນໃນທັນ ທີ (Minoo 2017) .

ຄວາມໝັ້ນຄົງທາງສັງຄົມ ແລະ ການເງິນ: ການເງິນຈຸລະພາກ

ຊາວສວນກາເຟຂະໜາດນ້ອຍທີ່ຜະລິດເອງ ແລະ/ຫຼື ຮັບຈ້າງໃນສວນກາເຟທີ່ໃຫຍ່ກວ່າ, ຕ້ອງໄດ້ລ້ຽງຊີບໂດຍ ອີງໃສ່ລາຍຮັບທີ່ຕໍ່າ, ບໍ່ສະໝໍ່າສະ ເໝີ, ແລະ ບໍ່ສາມາດຄາດການໄດ້ຈາກຫຼາຍໆແຫຼ່ງຂອງການປະກອບອາຊີບ. ໃນສະພາບການນີ້, ການຄຸ້ມຄອງເງິນ ແລະ ການເຮັດທຸລະກໍາທາງ ດ້ານການເງິນແມ່ນມີຄວາມຈໍາເປັນ: ການເຮັດທຸລະກໍາເຫຼົ່ານີ້ແມ່ນຈໍາເປັນສໍາລັບການຄຸ້ມຄອງກະແສເງິນສົດປະຈໍາວັນ, ເພື່ອຮັບມືກັບຄວາມ ສ່ຽງເຊັ່ນ: ອຸປະຕິເຫດ, ແລະ ການທ້ອນເງິນເພື່ອຕໍ່ຍອດເງິນໃຫ້ຫຼາຍກວ່າເກົ່າຖ້າຈໍາເປັນ, ຕົວຢ່າງເຊັ່ນ ສໍາລັບການລົງທຶນກ່ຽວກັບເຄື່ອງຈັກກະສິກໍາ. ໃນສະພາບການນີ້, ສະຖາບັນການເງິນຈຸລະພາກສະຫນອງການບໍລິການທີ່ສໍາຄັນ (Collins et al. 2009) .
ການພັດທະນາຂອງການເງິນຈຸລະພາກໃນລາວ ໄດ້ເລີ່ມຕົ້ນຂຶ້ນໃນຊຸມປີ 1990 ໂດຍມີອົງການພັດທະນາຫຼາຍຝ່າຍ ແລະ ສອງຝ່າຍສະໜັບ ສະໜູນການສ້າງໂຄງການສິນເຊື່ອຂອງບ້ານ ແລະ ກອງທຶນໝູນວຽນ. ໃນນີ້ມີສະຖາບັນ 4 ປະເພດທີ່ເປັນຖືກນໍາໃຊ້ໃນຂະບວນການດັ່ງກ່າວ: ທະນາຄານກາງໃນຖານະທີ່ເປັນອົງການຄຸ້ມຄອງ ທີ່ມີຄວາມຮັບຜິດຊອບລວມໃນການພັດທະນາການເງິນຈຸລະພາກ; ທະນາຄານການຄ້າຂອງ ລັດ ເປັນຜູ້ຂາຍຍ່ອຍ ແລະ ຂາຍສົ່ງທາງດ້ານການເງິນຈຸລະພາກ; ສະຫະພັນແມ່ຍິງລາວ ໂດຍຮ່ວມມືກັບອົງການຈັດຕັ້ງສາກົນທີ່ບໍ່ຂຶ້ນກັບລັດຖະບານ ແລະ ຜູ້ໃຫ້ທຶນ; ກຸ່ມເງິນຝາກປະຢັດ ແລະ ສິນເຊື່ອທີ່ບໍ່ເປັນທາງການ (Seibel and Kunkel 1999) .

ໃນຊ່ວງມໍ່ໆນີ້, ສະຖາບັນການເງິນຈຸລະພາກ (MFIs) (LMFA nd) . ຕົວຢ່າງ: ໂຄງການຂອງ GIZ 'ການເງິນຈຸລະພາກໃນເຂດຊົນນະບົດ - ການເຂົ້າເຖິງການເງິນສໍາລັບຄົນທຸກຍາກV' ໄດ້ບັນລຸວ່າ ແມ່ຍິງແລະຜູ້ຊາຍ ໃນເຂດຊົນນະບົດ ໄດ້ຮັບຜົນປະໂຫຍດເພີ່ມຂຶ້ນຈາກການບໍລິການ ທາງດ້ານການເງິນໂດຍຜ່ານສະຖາບັນທີ່ມີຄວາມໝັ້ນຄົງ, ການສຶກສາທາງດ້ານການເງິນທີ່ດີກວ່າເກົ່າ, ແລະ ການປັບປຸງຂອບກົດໝາຍ. ມາຮອດເດືອນມັງກອນ ປີ 2019, ກອງທຶນບ້ານຈໍານວນ 670 ແຫ່ງ ມີສະມາຊິກທັງໝົດ 153.000 ກວ່າຄົນ, ຍິງ 79.000 ຄົນ.

ການບໍລິຫານຄຸ້ມຄອງ

ສະຖາບັນຕ່າງໆຂອງລັດຖະບານລາວ

ໃນ 15 ປີທໍາອິດຫຼັງການສະຖາປະນາ ສປປ ລາວ ປະເທດໄດ້ປະສົບກັບການຂາດຄວາມອາດສາມາດຂອງລັດຖະບານ. ປະເທດໄດ້ຖືກປົກຄອງ ໂດຍບໍ່ມີລັດຖະທໍາມະນູນຫຼືລະບົບກົດໝາຍ. ກົນໄກເສດຖະກິດຕະຫຼາດແບບໃໝ່ໄດ້ຖືກນໍາສະເໜີໃນປີ 1986 ໄດ້ຊຸກຍູ້ໃຫ້ມີການປະຕິຮູບການເຄື່ອນໄຫວ, ເຊິ່ງໄດ້ບັນລຸເຖິງການປະກາດໃຊ້ລັດຖະທໍາມະນູນໃນປີ 1991. ລັດຖະທໍາມະນູນໄດ້ມີການກໍານົດກ່ຽວກັບສະຖາບັນຕ່າງໆຂອງລັດລວມທັງສະພານິຕິບັນຍັດ, ເຊັ່ນດຽວກັນກັບອົງການບໍລິຫານແລະຕຸລາການ. ສະພາແຫ່ງຊາດ ຕາງໜ້າໃຫ້ອໍານາດນິຕິບັນຍັດ. ອໍານາດບໍລິຫານຢູ່ໃນກໍາມືຂອງລັດຖະບານ ໂດຍນາຍົກລັດຖະມົນຕີເປັນຫົວໜ້າ, ນໍາພາຄະນະລັດຖະມົນຕີ. ສ່ວນອໍານາດຕຸລາການ ແມ່ນຢູ່ ໃນລະບົບສານ, ຂອບໃຈມາຍັງລັດຖະບານທີ່ມີຄວາມພະຍາຍາມໃນການຫັນ ສປປ ລາວ ໃຫ້ເປັນ “ລັດແຫ່ງ ກົດໝາຍ”.

ລະບົບປະກັນສັງຄົມ

ລະບົບດັ່ງກ່າວແມ່ນຊີ້ນໍາໂດຍກະຊວງແຮງງານແລະສະຫວັດດີການສັງຄົມ. ເພື່ອຮັບປະກັນວ່າຜູ້ປະກັນຕົນແລະ ສະມາຊິກໃນຄອບຄົວໄດ້ຮັບ ຊັບພະຍາກອນທາງດ້ານການເງິນເພື່ອຕອບສະໜອງຄວາມຕ້ອງການພື້ນຖານໃນການດູແລສຸຂະພາບ, ການບາດເຈັບຈາກການຈ້າງງານ, ພະຍາດອາຊີບ, ການລາພັກເກີດລູກ ແລະພະຍາດ ອື່ນໆທີ່ຢູ່ໃນເງື່ອນໄຂທີ່ກໍານົດ. ກຸ່ມເປົ້າໝາຍຂອງຜົນປະໂຫຍດໃນການປະກັນສັງຄົມແມ່ນ ພະນັກ ງານ-ລັດຖະກອນ, ທະຫານ, ຕໍາຫຼວດ ແລະ ພະນັກງານທີ່ເຮັດວຽກຢູ່ໃນສະຫະພັນກໍາມະບານ. ສໍາລັບການບໍລິການທີ່ຈໍາກັດແມ່ນມີໃຫ້ສໍາລັບ ຜູ້ປະກັນຕົນທີ່ມີຄວາມສະໝັກໃຈ, ຜູ້ທີ່ຕ້ອງແບກຫາບຄ່າໃຊ້ຈ່າຍດ້ວຍຄ່າຈ້າງຂອງພວກເຂົາເອງ.

ຊາວກະສິກອນ ແລະ ຊາວຜູ້ອອກແຮງງານ ສາມາດເປັນຜູ້ປະກັນຕົນແບບສະໝັກໃຈທີ່ໄດ້ຮັບຜົນປະໂຫຍດຈາກລະບົບປະກັນສັງຄົມ; ແນວໃດກໍ່ຕາມ, ພວກເຂົາຕ້ອງໄດ້ປະກອບສ່ວນ 9% ຂອງເງິນເດືອນ, ເຊິ່ງຢູ່ລະຫວ່າງ 1,100,000 ກີບ (ເງິນເດືອນຂັ້ນຕໍ່າ) ຫາ 2,700,000 ກີບ ເຂົ້າກອງທຶນປະກັນສັງຄົມຢ່າງໜ້ອຍສາມເດືອນ. ນັ້ນໝາຍຄວາມວ່າເຂົາເຈົ້າຕ້ອງຈ່າຍເງິນຢ່າງໜ້ອຍ 99,000 ກີບຕໍ່ເດືອນໃຫ້ກອງທຶນປະ ກັນສັງຄົມ. ເມື່ອພວກເຂົາຈ່າຍເງິນປະກອບສ່ວນເຂົ້າໃນກອງທຶນປະກັນສັງຄົມ, ສະມາຊິກໃນຄອບຄົວຂອງພວກເຂົາກໍສາມາດໄດ້ຮັບຜົນປະ ໂຫຍດຈາກການປະກັນສັງ

ຄົມ, ໂດຍສະເພາະແມ່ນການດູແລສຸຂະພາບ. ໃນປັດຈຸບັນ, ຍັງບໍ່ທັນມີນະໂຍບາຍບັງຄັບໃຫ້ນາຍຈ້າງ ໂດຍສະເພາະແມ່ນບໍລິສັດທີ່ເຮັດສວນກາເຟ ສະໜອງປະກັນໄພໃຫ້ແກ່ແຮງງານແບບໄລຍະສັ້ນ ແລະ ແບບຊົ່ວຄາວ ຕໍ່ກັບອຸປະຕິເຫດໃນເວລາເຮັດວຽກ ຫຼື ການເດີນທາງທີ່ກ່ຽວຂ້ອງກັບການເຮັດວຽກ.

ສິ່ງທ້າທາຍສໍາລັບການບໍລິຫານຄຸ້ມຄອງ

ປະເທດລາວມີລະບຽບການຂອງລັດຖະບານທີ່ມີຄວາມແຂງແຮງ, ແຕ່ຍັງມີສິ່ງທ້າທາຍໃນການຈັດຕັ້ງປະຕິບັດຢ່າງມີປະສິດທິພາບ. ການຮ່ວມມືລະຫວ່າງບັນດາພະແນກການ ຫຼື ຂະແໜງການທີ່ກ່ຽວຂ້ອງໃນລະດັບສູນກາງ ແລະ ທ້ອງຖິ່ນ ແມ່ນຍັງມີໜ້ອຍ, ໂດຍສະເພາະແມ່ນກ່ຽວກັບການສະໜັບສະໜູນນະໂຍບາຍທີ່ເປັນເອກະພາບ ກັນພ້ອມກັບການຈັດສັນງົບປະມານ ແລະ ຊັບພະຍາກອນມະນຸດໃນຂະແໜງກາເຟ. ສິ່ງນີ້ຍັງ ຖືເປັນສິ່ງທີ່ສໍາຄັນເຊິ່ງ ສົ່ງຜົນຕໍ່ການລົງທຶນ. ຜົນຂອງການລົງທຶນທີ່ຕໍ່າ ຫຼື ບໍ່ມີການລົງທຶນ ແລະ ການມີຊັບພະຍາກອນທີ່ຕໍ່າ ກໍສົ່ງຜົນໃຫ້ມີການ ຈັດຕັ້ງປະຕິບັດນະໂຍບາຍທີ່ຕໍ່າເຊັ່ນກັນ (Lao Coffee Board 2014) .

ການລົງທຶນໃນຂະແໜງກາເຟແມ່ນດໍາເນີນຄຽງຄູ່ກັບການຊຸກຍູ້ບັນດານະໂຍບາຍຂອງລັດຖະບານ ເພື່ອແນໃສ່ດຶງດູດການລົງທຶນທັງພາຍໃນ ແລະ ຕ່າງປະເທດໃຫ້ເຂົ້າມາໃນຂະແໜງການ. ເພື່ອພັດທະນາແລະປັບປຸງຄວາມເຂັ້ມແຂງຂອງກຸ່ມຜູ້ຜະລິດ, ຈໍາເປັນຕ້ອງໄດ້ສະຫນັບສະຫນູນ ພາກຂອງການປະຕິບັດເພີ່ມເຕີມ, ການຝຶກອົບຮົມທັກສະສ່ວນບຸກຄົນເຊັ່ນ: ການເຈລະຈາ, ແລະ ຄວາມຊໍານານທີ່ມີຢູ່ເພື່ອປັບປຸງການຜະລິດ ແລະເ ຮັດໃຫ້ຜູ້ຜະລິດມີການຈັດຕັ້ງທີ່ເປັນລະບົບຫຼາຍຂຶ້ນ, ເພື່ອໃຫ້ພວກເຂົາໄດ້ຮັບຜົນປະໂຫຍດຈາກການຜະລິດທັງໝົດ ແລະ ການເຂົ້າເຖິງ ສິນເຊື່ອ (Lao Coffee Board 2014) .

ການສໍ້ລາດບັງຫຼວງຖືເປັນຂໍ້ຕໍ່ທີ່ສໍາຄັນຂອງການບໍລິຫານຄຸ້ມຄອງທີ່ດີ ແລະ ການບັງຄັບໃຊ້ກົດໝາຍ ແລະ ມີຂໍ້ບົກຜ່ອງທາງສັງຄົມທີ່ສໍາຄັນ. ລັດຖະບານລາວໄດ້ໃຫ້ບຸລິມະສິດກັບບັນຫາດັ່ງກ່າວໃນແຜນການ 5 ປີແຫ່ງຊາດ ໂດຍໄດ້ກໍານົດລະບຽບການ, ກົດໝາຍ ແລະ ນະໂຍບາຍຂອງພັກໃນການຊຸກຍູ້ການຕ້ານການສໍ້ລາດບັງຫຼວງ. ຢູ່ໃນແຜນການ, ລັດຖະບານສູ້ຊົນຍົກສູງປະສິດທິພາບຂອງການຄຸ້ມຄອງຂອງລັດໂດຍຜ່ານລະ ບຽບກົດໝາຍ ແລະ ການສະກັດກັ້ນການສໍ້ລາດບັງຫຼວງ. ເພື່ອປິດຊ່ອງວ່າງໃນການຈັດຕັ້ງປະຕິບັດ, ລັດຖະບານຊອກຫາການຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດກົດໝາຍໃນແຕ່ລະໄລຍະເຊັ່ນ: ກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງ. ແນວໃດກໍຕາມ, ລັດຖະບານຍັງປະເຊີນໜ້າກັບສິ່ງທີ່ທ້າທາຍຫຼາຍຢ່າງເພື່ອບັນລຸເປົ້າໝາຍດັ່ງກ່າວ (ກະຊວງແຜນການ ແລະ ການລົງທຶນ 2016) .

ເມື່ອກ່າວເຖິງຂະແຫນງກາເຟ, ສິ່ງທີ່ທ້າທາຍທີ່ສໍາຄັນອີກຢ່າງຫນຶ່ງທີ່ ສະຖາບັນປົກຄອງຕ້ອງປະເຊີນແມ່ນການ ຫຼີກລ່ຽງພາສີໂດຍຜ່ານການ ຂາຍກາເຟທີ່ບໍ່ຖືກຕ້ອງ. ໃນຊ່ວງມໍ່ໆມານີ້, ຄະນະນັກຄົ້ນຄ້ວາໄດ້ພົບເຫັນການຕີລາຄາການສົ່ງອອກກາເຟທີ່ບໍ່ຫຼາຍປານໃດ, ເທົ່າກັບ 260 ລ້ານໂດລາສະຫະລັດ ຫຼື 77,1% ຂອງການສົ່ງອອກກາເຟທັງໝົດໃນໄລຍະປີ

2012-2017 (ເມຣາໂຣທາ, ໂນນລິນທາ, ແລະ ໄຊຍະວົງ 2020) . ການຄືນເງິນພາສີລ່ວງ ໜ້າເຊິ່ງເປັນຜົນມາຈາກການສວຍໃຊ້ຊ່ອງວ່າງເຫຼົ່ານີ້ ເປັນໄພຂົ່ມຂູ່ອັນຮ້າຍແຮງຕໍ່ຮູບແບບການພັດທະນາຂອງ ສປປ ລາວ.

### ພື້ນຖານໂຄງລ່າງທາງຄົມມະນາຄົມ ແລະ ຄົມມະນາຄົມ



*ຮູບທີ 15: ຂະບວນການກໍ່ສ້າງເສັ້ນທາງ, ຮູບພາບໂດຍ  Eva Ming*

ເຖິງແມ່ນວ່າປະເທດລາວຈະມີສະພາບເສດຖະກິດທີ່ມີການຂະຫຍາຍຕົວຢ່າງໃຫຍ່ຫຼວງກໍ່ຕາມ, ແຕ່ກໍຍັງປະສົບກັບສະພາບເສັ້ນທາງຄົມມະນາ ຄົມທີ່ບໍ່ດີ, ເຮັດໃຫ້ບາງເຂດຊົນນະບົດບໍ່ສາມາດເຂົ້າເຖິງໄດ້. ຄວາມແຕກຕ່າງອັນ ໃຫຍ່ຫຼວງເຫຼົ່ານີ້ທາງດ້ານປະລິມານ ແລະ ຄຸນນະພາບຂອງ ເສັ້ນທາງ ແລະ ໂຄງລ່າງພື້ນຖານສໍາລັບຄົມມະນາຄົມ ມີຜົນສະທ້ອນອັນໃຫຍ່ຫຼວງຕໍ່ການເຂົ້າເຖິງຕະຫຼາດ ແລະ ລາຄາ ຕົວຢ່າງ, ລາຄາສະເລ່ຍຕໍ່ ຂວດເບຍມີຄວາມແຕກຕ່າງ 50% ລະຫວ່າງຕົວແຂວງໄຊຍະບູລີ ແລະ ຕົວແຂວງຫຼວງພຣະບາງ, ເຊິ່ງຢູ່ຫ່າງກັນພຽງ 111 ກິໂລແມັດ: ຊ່ອງວ່າງລາຄາຂະໜາດໃຫຍ່ນີ້ອາດຈະສະທ້ອນເຖິງຄ່າໃຊ້ຈ່າຍໃນການດໍາເນີນທຸລະກໍາທີ່ສູງ ເນື່ອງຈາກສະພາບການຂົນສົ່ງທີ່ຫຍຸ້ງຍາກ ເຊິ່ງມັນເປັນສິ່ງ   ຈໍາເປັນທີ່ຈະຕ້ອງຄິດໄລ່ຄວາມແຕກຕ່າງຂອງຄ່າໃຊ້ຈ່າຍໃນການຂົນສົ່ງທີ່ເກີດຂຶ້ນຈາກຄຸນນະພາບຖະຫນົນທີ່ບໍ່ສະເຫມີພາບ, ເຊັ່ນດຽວກັນກັບ ຄວາມແຕກຕ່າງທີ່ກ່ຽວຂ້ອງກັບລະດັບການແຂ່ງຂັນ (ຫຼືຈໍານວນຜູ້ຄ້າ) ໃນແຕ່ລະສະຖານທີ່. ການເຫັນເຖິງຮູບແບບໃນລະດັບຊາດຄັ້ງທໍາອິດ, ຜົນໄດ້ຮັບແມ່ນເປັນໄປຕາມທີ່ຄາດໄວ້, ລາຄາຕໍ່າສຸດໃນ ບ້ານທີ່ຢູ່ຕົວເມືອງແລະລາຄາທີ່ສູງທີ່ສຸດໃນບ້ານທີ່ຢູ່ຊົນນະບົດທີ່ບໍ່ມີເສັ້ນທາງເຂົ້າເຖິງ (Andersson et al. 2007) .

ໃນຊຸມປີມໍ່ໆມານີ້, ການພັດທະນໂຄງລ່າງາພື້ນຖານທາງການຄົມມະນາຄົມມີການເກີດຂຶ້ນໄວ. ປະເທດລາວກໍເປັນພາກສ່ວນຂອງແຜນງານລິເລີ່ມໜຶ່ງແລວທາງໜຶ່ງເສັ້ນທາງ (BRI). ເສັ້ນທາງລົດໄຟ ລາວ-ຈີນ ທີ່ສ້າງຂຶ້ນພາຍໃຕ້ແຜນງານລິເລີ່ມດັ່ງກ່າວ ຈະເຊື່ອມຕໍ່ ສປປ ລາວ (ໄປສູ່ໄທ, ມາເລເຊຍ ແລະ ສິງກະໂປ) ໄປສູ່ເຄືອຂ່າຍໜຶ່ງແລວທາງໜຶ່ງເສັ້ນທາງທີ່ກວ້າງໃຫຍ່ໄພສານ. ການອອກແບບທາງລົດໄຟແບບຄວາມໄວສູງ, ຍາວ 414 ກິໂລແມັດ ເຊື່ອມຕໍ່ນະຄອນຫຼວງວຽງຈັນ

ແລະ ບໍ່ເຕັນ (ຢູ່ຊາຍແດນທາງພາກເໜືອຂອງ ສປ ຈີນ) ສາມາດເຮັດໃຫ້ ສປປ ລາວ ມີເສັ້ນທາງເຊື່ອມຕໍ່ສູ່ລະບົບຕ່ອງໂສ້ການສະໜອງໃນທົ່ວໂລກ ແລະ ພາກພື້ນ, ເຊິ່ງສາມາດດຶງດູດໃຫ້ປະເທດມີນັກລົງທຶນຫຼາຍຂຶ້ນ, ສ້າງວຽກເຮັດງານທຳແບບໃໝ່, ເລັ່ງການເຕີບໂຕທາງດ້ານເສດຖະກິດ ແລະ ເພີ່ມລາຍຮັບລວມ. ຖ້າປະເທດລາວປະຕິບັດການປະຕິຮູບດ້ານການຂົນສົ່ງ ແລະ ການອຳນວຍຄວາມສະດວກດ້ານການຄ້າໃຫ້ມີຄວາມສົມບູນຂຶ້ນ, ທາງລົດໄຟສາມາດດຶງດູດການສັນຈອນທີ່ນຳໃຊ້ເສັ້ນທາງການຂົນສົ່ງ ທາງທະເລ ແລະ ທາງອາກາດ ແລະ ຫຼຸດລາຄາການຂົນສົ່ງທາງບົກລົງ 40-50 ເປີເຊັນລະຫວ່າງນະຄອນຫຼວງວຽງຈັນ ແລະ ນະຄອນຄຸນໝິງ ຂອງຈີນ ແລະ 32 ເປີເຊັນລະຫວ່າງນະຄອນຄຸນໝິງ ແລະທ່າເຮືອແຫຼມຊະບັງຂອງປະທດໄທ, ສະນັ້ນຈຶ່ງເຮັດໃຫ້ມີການຫັນປ່ຽນສປປ ລາວຈາກປະເທດທີ່ບໍ່ມີຊາຍແດນຕິດກັບທະເລໃຫ້ເປັນດິນແດນທາງເສດຖະກິດທີ່ເຊື່ອມໂຍງກັນທາງບົກ . (ທະນາຄານໂລກ 2020a) .

## ການເຊື່ອມໂຍງເຂົ້າກັບປະຊາຄົມໂລກ

### ອົງການຈັດຕັ້ງສາກົນ

ສປປ ລາວ ແມ່ນສະມາຊິກຂອງສະຫະພັນເສດຖະກິດອາຊຽນ ເຊິ່ງລວມມີອີກ 9 ປະເທດໃນອາຊີຕາເວັນອອກສຽງໃຕ້ຄື: ມຽນມາ, ໄທ, ກຳປູເຈຍ, ຫວຽດນາມ, ມາເລເຊຍ, ສິງກະໂປ, ອິນໂດເນເຊຍ, ບຣູໄນ, ແລະ ຟີລິບປິນ. ອາຊຽນຊຸກຍູ້ການຮ່ວມມືລະຫວ່າງປະເທດສະມາຊິກກໍຄືການພັດທະນາເສດຖະກິດແລະຄວາມຄືບໜ້າຂອງສັງຄົມ. ນອກຈາກນັ້ນ, ສປປ ລາວ ກໍ່ເປັນສ່ວນໜຶ່ງຂອງອົງການການຄ້າໂລກ (WTO), ອົງການສະຫະປະຊາຊາດ ແລະ ກອງທຶນການເງິນສາກົນ (IMF) ແລະ ທະນາຄານໂລກ.

## ການຮ່ວມມືດ້ານພັດທະນາ

ການຮ່ວມມືດ້ານການພັດທະນາເປັນພາກສ່ວນຫນຶ່ງທີ່ສຳຄັນຂອງນະໂຍບາຍການຕ່າງປະເທດ, ຢ່າງຫນ້ອຍແມ່ນນັບຕັ້ງແຕ່ສິ້ນສຸດສົງຄາມໂລກຄັ້ງທີ 2 ແລະ ແຜນງານ Marshall. ໃນກໍລະນີຂອງປະເທດສະວິສເຊີແລນ, ອົງການເພື່ອການພັດທະນາແລະການຮ່ວມມືຂອງສະວິດ (SDC), ພາຍໃຕ້ການຊີ້ນຳຂອງສະຫະພັນການຕ່າງປະເທດ (FDFA) ເປັນຫ້ອງການຫຼັກທີ່ຮັບຜິດຊອບດ້ານການທູດນີ້ ເຊິ່ງຈະໄດ້ຮັບການຈັດສັນທຶນ 84,1% ຂອງຈຳນວນທຶນທັງໝົດສຳລັບການຮ່ວມມືລະຫວ່າງປະເທດໃນໄລຍະ 2021-2024 ແລະ ຮັບຜິດຊອບໃນການປະສານງານກ່ຽວກັບຄວາມພະຍາຍາມຂອງສະຫະພັນໃນການຮ່ວມມືດ້ານການພັດທະນາ ແລະ ການຊ່ວຍເຫຼືອດ້ານມະນຸດສະທຳ. ໃນຍຸດທະສາດການຮ່ວມມືສາກົນຂອງສະວິດ 2021-24, ປະກອບມີສາມຈຸດປະສົງບູລິມະສິດໃນອາຊີກາງ, ໃຕ້ ແລະ ຕາເວັນອອກສ່ຽງໃຕ້ຄື: ການຫຼຸດຜ່ອນ ແລະ ການປັບຕົວຕໍ່ກັບການປ່ຽນແປງຂອງສະພາບດິນຟ້າອາກາດ, ການຊຸກຍູ້ການບໍລິຫານຄຸ້ມຄອງທີ່ດີ, ແລະ ການພັດທະນາເສດຖະກິດ (FDFA 2020) .

### ສະພາກາເຟລາວ

ໃນທ້ອງຖິ່ນແລ້ວ, ສະພາກາເຟລາວ (LCB) ມີໜ້າທີ່ໃນການປະສານງານການພັດທະນາຂະແໜງກາເຟ. ໃນຍຸດທະສາດປີ 2025 (2014) , ໄດ້ມີວິໄສທັດຄື: "ການຂະຫຍາຍຂະແໜງກາເຟ, ມຸ່ງໄປເຖິງຄຸນນະພາບ ແລະ ເຄົາລົບສິ່ງແວດລ້ອມ, ສ້າງລາຍໄດ້ທີ່ຍືນຍົງ ແລະ ເໝາະສົມໃຫ້ແກ່ຜູ້ຜະລິດຂະໜາດນ້ອຍ, ເປັນເງື່ອນໄຂໃນການດຳເນີນທຸລະກິດໃຫ້ແກ່ບັນດາຄູ່ຮ່ວມມືພາກເອກະຊົນ". (ໜ້າທີ 11). ຢ່າງໃດກໍ່ຕາມ, ພວກເຂົາໄດ້ກຳນົດເຖິງສິ່ງທ້າທາຍ ທີ່ຮ້າຍແຮງສຳລັບການບັນລຸເປົ້າຫມາຍເຫຼົ່ານີ້: ການຂາດການລົງທຶນໃນການຄົ້ນຄວ້າແລະການພັດທະນາ, ເຊັ່ນດຽວກັນກັບການສົ່ງເສີມທາງດ້ານວິຊາການ, ວິທີການເກັບຮັກສາທີ່ລ້າສະໄຫມ ແລະ ບໍ່ມີກຸ່ມຜູ້ຜະລິດໃນການຕັດສິນໃຈກ່ຽວກັບໂຄງການພັດທະນາລະບົບຕ່ອງໂສ້ມູນຄ່າສິນຄ້າ (ໜ້າທີ.7- 8).

### ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລະຖະບານ

ໂດຍອີງຕາມປະຫວັດສາດແລ້ວ, ສັງຄົມພົນລະເຮືອນຂອງລາວໄດ້ມີຂໍ້ຈຳກັດຫຼາຍຢ່າງ. ຈົນບໍ່ດົນມານີ້, ໂດຍສ່ວນໃຫຍ່ແມ່ນໄດ້ນຳໃຊ້ຮູບແບບ ຂອງອົງການຈັດຕັ້ງມະຫາຊົນ, ເຊິ່ງທະນາຄານພັດທະນາອາຊີ (2011) ອະທິບາຍວ່າເປັນ "ອົງການຈັດຕັ້ງພັກເຄິ່ງລັດຖະບານ" (ຫນ້າທີ 2). ສຳລັບສິດທິຂອງສະມາຄົມແມ່ນຫາກໍໄດ້ຮັບການຢັ້ງຢືນນັບຕັ້ງແຕ່ປີ 1991. ໃນປີ 2009 ແລະ 2010, ລັດຖະດຳລັດໄດ້ກຳນົດສິດ ແລະ ພັນທະ ຂອງສັງຄົມພົນ ລະເຮືອນ ແລະອົງການອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານຕາມລຳດັບ. ດັ່ງນັ້ນ, ການມີສ່ວນຮ່ວມຂອງອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານໄດ້ເພີ່ມຂຶ້ນຢ່າງຫຼວງຫຼາຍໃນທົດສະວັດທີ່ຜ່ານມາ (ABD 2011) .

## ບົດສົ່ງທ້າຍ

ບົດແນະນຳສັ້ນນີ້ມີຈຸດປະສົງເພື່ອໃຫ້ຜູ້ອ່ານເຂົ້າໃຈເຖິງບົດບາດອັນກວ້າງຂວາງຂອງບັນດາຕົວລະຄອນໃນເວັບໄຊ, ສິ່ງທ້າທາຍ, ທັດສະນະ, ແລະຜົນປະໂຫຍດທີ່ຂະແໜງກາເຟລາວໄດ້ຍົກໃຫ້ເຫັນ. ພວກເຮົາເລີ່ມຕົ້ນໂດຍການ ອາດພາບຂອງການຂະຫຍາຍຕົວທາງດ້ານເສດຖະກິດແບບຍືນຍົງ, ການເຊື່ອມໂຍງກັນໃນທົ່ວໂລກແລະຄວາມກ້າວ ຫນ້າທາງດ້ານເຕັກໂນໂລຊີ, ແຕ່ດັ່ງທີ່ພວກເຮົາໄດ້ເຫັນໃນພາກ "ການດຳລົງ ຊີວິດ", ຜົນຈາກການພັດທະນາໃນທາງບວກເຫຼົ່ານີ້ບໍ່ໄດ້ຕົກຢູ່ໃນມືຂອງຕົວລະຄອນທັງຫມົດໃນອັດຕາສ່ວນທີ່ເທົ່າທຽມກັນ. ສຳລັບສະພາບ ແວດລ້ອມ, ພວກເຮົາເຫັນວ່າສິ່ງທ້າທາຍທີ່ຮ້າຍແຮງຍັງຄົງຢູ່. ເອກະສານທີ່ໄດ້ກ່າວເຖິງຄວາມເປັນມາໃນສະບັບນີ້ ໄດ້ແຈ້ງໃຫ້ຮັບຮູ້ກ່ຽວກັບ ບົດບາດ, ສິດ ແລະ ຄວາມຮັບຜິດຊອບຂອງຜູ້ມີອຳນາດ, ທັງໃນລັດຖະບານ ແລະ ສັງຄົມພົນລະເຮືອນທີ່ເຕີບໃຫຍ່ຂະຫຍາຍຕົວ. ສະຫລຸບແລ້ວ, ນອກຈານອາດີດທີ່ຜ່ານມາ, ປະເທດລາວເບິ່ງຄືວ່າຈະສະເໜີໂອກາດໃນສະພາບການໂລກທີ່ມີສິ່ງທ້າທາຍນັບມື້ນັບຮ້າຍແຮງຂຶ້ນ, ມີຫຼາຍພາກສ່ວນທີ່ລຽນຄິວສະແຫວງຫາຜົນປະໂຫຍດ. ໃນທ່າມກາງການຕໍ່ສູ້ເຫຼົ່ານີ້, ຜົນ

ປະໂຫຍດທີ່ແຕກຕ່າງກັນຈະຕ້ອງໄດ້ຮັບການແລກປ່ຽນກັນ, ມີການປະນີປະນອມ ແລະ ການຕັດສິນໃຈໃນການດຳເນີນການ.

# ສາລະບານຮູບພາບ

ຮູບທີ 1 : ແຜນທີ່ ສປປ ລາວ , ທີ່ມາ: Google Maps. ....4
ຮູບທີ 2 : ຕ່ອງໂສ້ມູນຄ່າກາເຟ ແລະ ພາກສ່ວນກ່ຽວຂ້ອງ. ແຫຼ່ງຂໍ້ມູນ: Galindo ແລະSallée 2008 ....6
ຮູບທີ 8: ການຕາກແດດກາເຟອາຣັບບິກາທີ່ລ້າງແລ້ວ. ແຫຼ່ງທີ່ມາ: ການລົງພາກສະໜາມວັນທີ 21 ພະຈິກ 2020. ຮູບຖ່າຍໂດຍ ມະລິພອນ ດວງພະຈັນ....10
ຮູບທີ 6: ການຕາກກາເຟກາງ. ແຫຼ່ງທີ່ມາ: Galindo and Sallée 2008....10
ຮູບທີ 9: ການລ້າງໝາກກາເຟນ້ອຍທີ່ແຊ່ໄວ້. ແຫຼ່ງທີ່ມາ: ການລົງພາກສະໜາມວັນທີ 21 ພະຈິກ 2020. ຮູບຖ່າຍໂດຍ ມະລິພອນ ດວງພະຈັນ....10
ຮູຍທີ 5: ການອົ້ວກາເຟນ້ອຍ. ແຫຼ່ງທີ່ມາ: Galindo and Sallée 2008....10
ຮູບທີ 7: ການໝັກກາເຟນ້ອຍ: ລົງພາກສະໜາມວັນທີ 22 ພະຈິກ 2016. ຮູບຖ່າຍໂດຍ ມະລິພອນ ດວງພະຈັນ....10
ຮູບທີ 10 : ເປົ້າໝາຍການພັດທະນາແບບຍືນຍົງ. ແຫຼ່ງທີ່ມາ: UNESCO 2015 ....11
ຮູບທີ 11: ການຖົດຖອຍຂອງ GDP ຂອງລາວໃນຂະແໜງການຕົ້ນຕໍ. ທີ່ມາ: ທະນາຄານແຫ່ງສປປລາວ 2001....12
ຮູບທີ 12: ໂລໂກ້ປອດສານພິດລາວ....16

# ບັນນານຸກົມ


ABD. 2011. *Civil Society Briefs: Lao People's Democratic Republic*. Asian Development Bank. https://www.adb.org/publications/civil-society-briefs-lao-peoples-democratic-republic.

Andersson, Magnus, Anders Engvall, Ari Kokko, and Sida. 2007. *Regional Development in the Lao PDR*. Stockholm: Sida. http://www.sida.se/shared/jsp/download.jsp?f=SIDA37198en_CER+2007-3_web.pdf&a=32198.

Collins, Daryl, Jonathan Morduch, Stuart Rutherford, and Orlanda Ruthven. 2009. *Portfolios of the Poor: How the World's Poor Live on $2 a Day*. Princeton: Princeton University Press.

Douangphachanh, Maliphone, Rusaslina Binti Idrus, Saithong Phommavong, and Stéphanie Jaquet. 2021. 'Agriculture Transition and Women's Decision-Making Power in Coffee-Farming Households in Lao PDR'. *JATI - Journal of Southeast Asian Studies* 26 (1): 49–71. https://doi.org/10.22452/jati.vol26no1.3.

Falak, Ayman. 2021. 'Minimum Wages in ASEAN for 2021'. ASEAN Briefings. *ASEAN Business News* (blog). 3 May 2021. https://www.aseanbriefing.com/news/minimum-wages-in-asean-for-2021/.

FAO, (FAO Regional Office for Asia and the Pacific). 2018. 'Country Gender Assessment of Agriculture and the Rural Sector in Lao People's Democratic Republic'. Vientiane: Food and Agriculture Organization of the United Nations. http://www.fao.org/3/CA0154EN/ca0154en.pdf.

FDFA. 2020. 'Switzerland's International Cooperation Strategy 2021-24'. Bern. https://www.eda.admin.ch/eda/en/fdfa/fdfa/publikationen.html/content/publikationen/en/deza/diverse-publikationen/broschuere-iza-2021-24.

Galindo, J., and B. Sallée. 2008. 'Participative Analysis of Coffee Supply Chain in Lao PDR'. 2008. https://www.semanticscholar.org/paper/Participative-analysis-of-coffee-supply-chain-in-Galindo/411a491ef6a86e93a19e1204fb417ea506aa2c69.

Haney, Walt. 1972. 'The Pentagon Papers and the United States Involvement in Laos'. In *Pentagon Papers*, Gravel Edition, 5:248–93. Boston: Beacon Press.

Hett, Cornelia, Vong Nanhthavong, Savanh Hanephom, Anongsone Phommachanh, Boungnong Sidavong, Ketkeo Phouangphet, Juliet Lu, et al. 2020. 'Land Leases and Concessions in the Lao PDR. A Characterization of Investments in Land and Their Impacts. Based on Field Data of 2014 - 2017.' Bern: Centre for Development and Environment, University of Bern, Switzerland. https://www.cde.unibe.ch/unibe/portal/fak_naturwis/g_dept_kzen/b_cde/content/e65013/e681581/e908971/e909026/e1015759/LanddealsintheLaoPDR_Eng_4SEP2020LQ_eng.pdf.

Kenney-Lazar, Miles, Michael Dwyer, and Cornelia Hett. 2018. 'Turning Land into Capital: Assessing A Decade of Policy in Practice. A Report Commissioned by the Land Information Working Group (LIWG)'. Application/pdf. https://doi.org/10.7892/BORIS.121985.

Lao Coffee Board. 2014. 'Lao Coffee Sector Development Strategy by 2025'. Vientiane: Lao Coffee Board.

Lao Statistics Bureau. 2011. 'Statistical Yearbook 2010'. Vientiane: Laos Ministry of Planning and Investment. https://www.lsb.gov.la/yearbook/2010.pdf.

———. 2018. 'Statistical Yearbook 2017'. Vientiane: Laos Minstry of Planning and Investment. https://www.lsb.gov.la/yearbook/2017.pdf.

———. 2021. 'Statistical Yearbook 2020'. Vientiane: Ministry of Planning and Investment.

Leach, Melissa, Belinda Reyers, Xuemei Bai, Eduardo S. Brondizio, Christina Cook, Sandra Díaz, Giovana Espindola, Michelle Scobie, Mark Stafford-Smith, and Suneetha M. Subramanian. 2018. 'Equity and Sustainability in the Anthropocene: A Social-Ecological Systems Perspective on Their Intertwined Futures'. *Global Sustainability* 1: 1–13. https://doi.org/10.1017/sus.2018.12.

LMFA. n.d. 'Microfinance in Laos – Lao Micro Finance Association'. Accessed 20 May 2021. https://laomfa.org/about-us/microfinance-in-laos/.

Mehrotra, Rahul, Vanthana Nolintha, and Vanxay Sayavong. 2020. 'Commodity Trade Mispricing: Evidence from Lao P.D.R.', Curbing Illicit Financial Flows from Resource-rich Developing Countries: Improving Natural Resource Governance to Finance the SDGs, , June.

Ministery of Planning and Investment. 2016. '8th Five-Year National Socio-Economic Development Plan (2016-2020)'.

Minoo, Arihiro. 2017. 'Why Do Farmers Not Choose Fair Trade Cooperatives?: A Consideration Based on the Livelihood Strategy of Coffee Farmers in Lao PDR'. *Human Organization* 76 (2): 131–40. https://doi.org/10.17730/0018-7259.76.2.131.

MPI, (Ministry of Planning and Investment). 2016. 'Five Year National Socio-Economic Development Plan VIII (2016-2020)'. Vientiane: Laos Ministry of Planning and Investment.

Nanhthavong, Vong, Christoph Oberlack, Cornelia Hett, Peter Messerli, and Michael Epprecht. 2021. 'Pathways to Human Well-Being in the Context of Land Acquisitions in Lao PDR'. *Global Environmental Change* 68 (May): 102252. https://doi.org/10.1016/j.gloenvcha.2021.102252.

Pham-Truffert, Myriam, Florence Metz, Manuel Fischer, Henri Rueff, and Peter Messerli. 2020. 'Interactions among Sustainable Development Goals: Knowledge for Identifying Multipliers and Virtuous Cycles'. *Sustainable Development*, 1–15. https://doi.org/10.1002/sd.2073.

Phommavong, Saithong. 2015. 'FATE Laos Research Project - Mapping the Context'. Vientiane: National University of Laos.

Rigg, Jonathan. 2005. *Living with Transition in Laos: Market Integration in Southeast Asia*. London, New York: Routledge.

Saxon, Wolfgang. 1975. 'Take-Over Ends Strife in Laos That Outsiders Had Intensified'. *The New York Times*, 24 August 1975, sec. Archives. https://www.nytimes.com/1975/08/24/archives/takeover-ends-strife-in-laos-that-outsiders-had-intensified.html.

Seibel, Hans, and Carmen Kunkel. 1999. 'Microfinance In Laos: A Case for Women's Banking?', January.

Seneduangdeth, Dexanourath, Kiengkay Ounmany, Saithong Phommavong, Kabmanivanh Phouxay, and Keophouthon Hathalong. 2018. 'Labor Employment Opportunities in Coffee Production in Southern Lao People's Democratic Republic'. *Journal of Asian Rural Studies* 2 (1): 16–36.

Tavares, Marcia. 2021. 'Potential Impacts of LDC Graduation on Development Cooperation in Cambodia, Comoros, Djibouti, Senegal, and Zambia: Preliminary Assessment'. CDP Background Paper 53. https://www.un.org/ldcportal/impacts-of-graduation/.

UN DESA. 2018. 'Least Developed Country Category: Lao People's Democratic Republic Profile | Department of Economic and Social Affairs'. 2018. https://www.un.org/development/desa/dpad/least-developed-country-category-lao-peoples-democratic-republic.html/.

UNCTAD. 2020. 'Lao People's Democratic Republic: Sustainable Commercialisation In the Coffee Value Chain - Fostering the Development of Green Exports Through Voluntary Sustainability Standards', 37.

United Nations. 1987. 'Our Common Future'. Report of the World Commission on Environment and Development. United Nations.

———. 2015. 'Transforming Our World: The 2030 Agenda for Sustainable Development'. United Nations. https://sustainabledevelopment.un.org/content/documents/21252030%20Agenda%20for%20Sustainable%20Development%20web.pdf.

World Bank. 2020a. 'From Landlocked to Land-Linked: Unlocking the Potential of Lao-China Rail Connectivity'. Washington, DC: World Bank.

———. 2020b. *Purchasing Power Parities and the Size of World Economies: Results from the 2017 International Comparison Program*. Washington, DC: World Bank. https://doi.org/10.1596/978-1-4648-1530-0.